# ປະເມີນທັດສະນະຂອງປະຊາຊົນກ່ຽວກັບຜົນກະທົບຂອງການສຳປະທານທີ່ດິນ ຕໍ່ກັບ ຊັບພະຍາກອນປ່າໄມ້ ບ້ານ ປະຈຸດອນ ແລະ ບ້ານ ຕະຮວກ, ເມືອງ ຕະໂອ້ຍ, ແຂວງ ສາລະວັນ, ສປປ ລາວ.

Local Community Perception on Impacts of Land Concession from Plantation company on Forest Resources
The Case Study: Tahok and Pajudone Villages, Taoy District, Salavane Province, Lao PDR.

*ທ. ພູເຂົາ ພຸດທະວົງ, ນ. ມະນີຫວັນ ທະວີສິດ, ອຈ. ສາຍຄຳ ບຸດທະວົງ, ອຈ. ທອງຄູນ ບົວເຮືອງ.*

## ບົດຄັດຫຍໍ້ (Abstract)

ການສຳປະທານທີ່ດິນໃນປະເທດເຮົາແມ່ນໄດ້ຂະຫຍາຍຕົວໄປທົ່ວທຸກພາກ ໂດຍສະເພາະແມ່ນຢູ່ທາງພາກໃຕ້ ການສຳປະທານທີ່ດິນສ່ວນໃຫຍ່ແມ່ນເພື່ອຜະລິດກະສິກຳ ແລະ ປູກໄມ້ອຸດສະຫະກຳເພື່ອເປັນສິນຄ້າ ການສຳປະທານທີ່ດິນສ່ວນຫຼາຍແມ່ນຈະສຳປະທານຂະໜາດໃຫຍ່ ເຊິ່ງມັນອາດສົ່ງຜົນກະທົບເຮັດໃຫ້ຊັບພະຍາກອນປ່າໄມ້ ກໍ່ຄືຊະນິດພັນຂອງໄມ້ ແລະ ເຄື່ອງປ່າຂອງດົງໃນທ້ອງຖິ່ນມີການປ່ຽນແປງ. ຍ້ອນບັນຫາທີ່ກ່າວມາຂ້າງເທິງນັ້ນ ໄດ້ເຮັດໃຫ້ພວກຂ້າພະເຈົ້າມີຄວາມສົນໃຈ ຈຶ່ງໄດ້ເກີດມີການສຶກສາຄົ້ນຄວ້າໃນຄັ້ງນີ້ຂື້ນມາ, ຈຸດປະສົງການສຶກສາແມ່ນມີ 2 ຈຸດປະສົງຄື: ປະເມີນການປ່ຽນແປງສະຖານະພາບຂອງຊະນິດພັນໄມ້ ແລະ ເຄື່ອງປ່າຂອງພາຍຫຼັງມີການສຳປະທານທີ່ດິນ ແລະ ປະເມີນທັດສະນະຂອງປະຊາຊົນຕໍ່ກັບການສຳປະທານທີ່ດິນ. ໄດ້ລົງເລິກກ່ຽວກັບການປ່ຽນແປງດ້ານສະຖານະພາບຂອງຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງທີ່ມີຄຸນຄ່າ ແລະ ປະຊາຊົນມັກນິຍົມນຳໃຊ້, ໄດ້ລົງເລິກເຖິງທັດສະນະຂອງປະຊາຊົນ ຫຼື ແນວຄວາມຄິດຂອງປະຊາຊົນຕໍ່ກັບການສຳປະທານທີ່ດິນເປັນຄືແນວໃດ ເຊິ່ງສະຖານທີ່ການສຶກສາແມ່ນຢູ່ ບ້ານ ຕະຮວກ ແລະ ບ້ານ ປະຈຸດອນ, ເມືອງ ຕະໂອ້ຍ ແຂວງ ສາລະວັນ ທັງສອງບ້ານນີ້ແມ່ນເປັນຄົນເຜົ່າປະໂກະ ແລະ ນັບຖືຜີທຸກຄອບຄົວ, ມີອາຊີບເຮັດໄຮ່ ແລະ ເຮັດນາເປັນຫຼັກ. ວິທີການສຶກສາການສຶກສາແມ່ນປະກອບມີການເກັບກຳຂໍ້ມູນ, ການວິເຄາະ ແລະ ການຄັດເລືອກບ້ານເປົ້າໝາຍ ເຊິ່ງໃນການເກັບກຳຂໍ້ມູນນັ້ນແມ່ນມີສອງວິທີ່ຄື: ການເກັບກຳຂໍ້ມູນມືສອງ ແລະ ການເກັບຂໍ້ມູນໃນພາກສະໜາມ ໂດຍການສຳພາດອົງຈັດຕັ້ງບ້ານ ແລະ ກຸ່ມຄອບຄົວ (ສຳພາດ 50%) ໃນການວິເຄາະນັ້ນແມ່ນໄດ້ໃຊ້ໂປຼແກມທາງສະຖິຕິ ເຊິ່ງຈະວິເຄາະທາງດ້ານປະລິມານ ແລະ ຄຸນນະພາບ.

ຜ່ານການສຶກສາຄົ້ນຄວ້າແມ່ນໄດ້ພົບອອກມາວ່າ ກ່ອນມີການສຳປະທານນັ້ນ ສະຖານະພາບຂອງຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງແມ່ນຢູ່ໃນສາມລະດັບຄື: ຫຼາຍ, ປານກາງ ແລະ

ໜ້ອຍ, ພາຍຫຼັງມີການສຳປະທານທີ່ດິນເກີດຂື້ນຢູ່ບ້ານຕະຮວກ ແມ່ນບໍ່ໄດ້ເຮັດໃຫ້ສະຖານະພາບຂອງຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງຢູ່ບ້ານດັ່ງກ່າວມີການປ່ຽນແປ່ງ, ສ່ວນຢູ່ ບ້ານ ປະຈຸດອນ ສະຖານະພາບຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງ ແມ່ນໄດ້ມີການປ່ຽນແປງຄືໄດ້ຫຼຸດລົງກວ່າແຕ່ກ່ອນບໍ່ມີການສຳປະທານ, ເຊິ່ງຄ່າສະເລ່ຍຂອງຈຳນວນຄອບຄົວທັງສອງບ້ານທີ່ບອກວ່າສະຖານະຂອງຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງມີການປ່ຽນແປງແມ່ນ 20 ຄອບຄົວ ເທົ່າ 33.89%, ບອກວ່າບໍ່ປ່ຽນແປງແມ່ນ 39 ຄອບຄົວ ເທົ່າ 66.11%.

ສ່ວນທັດສະນະຂອງປະຊາຊົນພາຍຫຼັງທີ່ມີການສຳປະທານທີ່ດິນນັ້ນ ການສຳປະທານທີ່ດິນໄດ້ເຮັດໃຫ້ປະຊາຊົນບາງກຸ່ມຄອບຄົວມີລາຍໄດ້ຫຼຸດລົງ ແລະ ເຮັດໃຫ້ຊີວິດການເປັນຢູ່ລຳບາກກວ່າເກົ່າ, ສະເລ່ຍທັງສອງບ້ານແມ່ນ 18 ຄອບຄົວ ເທົ່າ 43.90%. ການສຳປະທານໄດ້ມີການບຸກລຸກເຂົ້າພື້ນທີ່ປ່າສັກສິດ, ປ່າຊົມໃຊ້ ແລະ ປ່າສະຫງວນຂອງບ້ານ ເຊິ່ງເປັນການແຕະຕ້ອງເຖິງຮີດຄອງປະເພນີຂອງເຂົາເຈົ້າ ແລະ ການສຳປະທານໄດ້ທຳລາຍພື້ນທີ່ທຳການຜະລິດ, ພື້ນທີ່ເກັບເຄື່ອງປ່າຂອງດົງ ແລະ ໄມ້ໃຊ້ສອຍ ເຊິ່ງເຮັດໃຫ້ປະຊາຊົນບໍ່ມີຄວາມພໍໃຈ, ສະເລ່ຍທັງສອງບ້ານແມ່ນມີ 24.5 ຄອບຄົວ ເທົ່າ 41.52%. ການສຳປະທານທີ່ດິນໄດ້ເຮັດໃຫ້ປະຊາຊົນບາງກຸ່ມຄອບຄົວໄດ້ຮັບຜົນກະທົບຄືການສຳປະທານໄດ້ເຮັດໃຫ້ພື້ນທີ່ໃນການເຮັດໃຫ້ຂອງປ່າຊາຊົນຖືກທຳລາຍ ແລະ ສູນເສຍໄປ, ຈຳນວນຜູ້ທີ່ໄດ້ຮັບຜົນກະທົບຈາກການສຳປະທານສະເລຍທັງສອງບ້ານແມ່ນມີ 22 ຄອບຄົວເທົ່າກັບ 49.15% ແລະ ສຸດທ້າຍທັດສະນະຂອງປະຊາຊົນຕໍ່ກັບການນຳໃຊ້ນ້ຳຂອງປະຊາຊົນ, ທັງສອງບ້ານແມ່ນໃຫ້ທັດສະນະຄືກັນ ຄືພາຍຫຼັງມີການສຳປະທານແມ່ນບໍ່ໄດ້ເຮັດໃຫ້ການນຳໃຊ້ນ້ຳບໍ່ມີການປ່ຽນແປງ ເພາະບໍລິສັດບໍ່ໄດ້ມີການນຳໃຊ້ນ້ຳ ແລະ ສານເຄມີເຂົ້າໃນການຜະລິດກໍ່ຄືການປູກມັນຕົ້ນ.

# ພາກທີ I: ພາກສະເໜີ (Introduction)

ການເປີດກວ້າງ ຫຼື ການເປີດໂອກາດໃຫ້ນາຍທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າມາລົງ ທຶນເພື່ອເຮັດການຜະລິດຕ່າງໆນັ້ນ ແມ່ນມີທັງຂໍ້ດີ ແລະ ຂໍ້ເສຍຫຼາຍໆຢ່າງຄື: ໃນຂໍ້ດີແມ່ນເຮັດໃຫ້ປະຊາຊົນມີວຽກເຮັດງານທຳ, ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງບາງດ້ານ, ລັດຖະບານມີລາຍໄດ້ຈາກຄ່າທຳນຽມ ແລະ ຄ່າພັນທະຕ່າງໆ ແລະ ອື່ນໆ . ສຳລັບຂໍ້ເສຍ, ການເຂົ້າມາລົງທຶນເຮັດການຜະລິດຕ່າງໆອາດກໍ່ໃຫ້ເກີດມີຄວາມຂັດແຫຍ່ງລະຫວ່າງປະຊາຊົນກັບບໍລິສັດ ຂະບວນການຜະລິດອາດກໍ່ໃຫ້ເກີດມົນລະພິດຕ່າງໆເຊັ່ນ: ມົນລະພິດທາງອາກາດ, ມົນລະພິດທາງນ້ຳ ແລະ ດິນ, (ຂັນທະລີວັນ, 2009), ການສຳປະທານໃນເຂດທີ່ສູງອາດເຮັດໃຫ້ມີການເຊາະເຈື່ອນ, ດິນເສຍຄວາມອຸດົມ ສົມບູນ ແລະ ກະທົບຕໍ່ກັບແຫຼ່ງນ້ຳທຳມະຊາດ (ນັນທະວົງ, 2009), ການສຳປະທານເຮັດໃຫ້ປະຊາ ຊົນສູນເສຍທີ່ດິນທຳການຜະລິດ ສະນັ້ນເຂົາເຈົ້າຈຶ່ງສ່ຽງທຸກວິທີທາງເພື່ອເຂົ້າຫາປ່າທຸກປະເພດ ແລະ ຫາວິທີຂະຫຍາຍການຜະລິດກະສິກຳເຊິ່ງເປັນສາເຫດ ເຮັດໃຫ້ເກີດຜົນເສຍຫາຍຕໍ່ສິ່ງແວດລ້ອມໂດຍສະເພາະແມ່ນແຫຼ່ງນ້ຳ, ແມ່ນ້ຳລຳເຊຕ່າງໆ ແລະ ເຂດດິນທີ່ອຸດົມສົມບູນ (ແກ້ວວິໄລສັກ, 2009).

ການສຳປະທານທີ່ດິນເປັນມາດຕະການໜຶ່ງຂອງລັດຖະບານ ທີ່ອະນຸຍາດໃຫ້ຜູ້ທີ່ມີຄວາມສົນໃຈຕ້ອງການສຳປະທານທີ່ດິນທັງພາຍໃນ ແລະ ຕ່າງປະເທດເພື່ອລົງທຶນເຮັດການຜະລິດຕ່າງໆ ຂະບວນການອະນຸມັດສຳປະທານທີ່ດິນທີ່ຜ່ານມາຈຶ່ງກ່ຽວຂ້ອງໂດຍກົງກັບກົດໝາຍ ແລະ ນະໂຍບາຍການສົ່ງເສີມການລົງທຶນ ແລະ ໜ່ວຍງານທີ່ມີບົດບາດທີ່ຜ່ານມາ (ສຄຂດ, ເມສາ 2008) , ການສຳປະທານທີ່ດິນເພື່ອເຮັດການຜະລິດຕ່າງໆນັ້ນແມ່ນມີທັງຜົນດີ ແລະ ຜົນກະທົບດັ່ງທີ່ໄດ້ກ່າວມາຢູ່ຂ້າງເທິງນັ້ນ. ສະນັ້ນ, ເພື່ອເປັນການຊີ້ແຈງ ແລະ ເຮັດໃຫ້ເຮົາຮູ້ຢ່າງຊັດເຈນວ່າການສຳປະທານທີ່ດິນນັ້ນແມ່ນມີຜົນກະທົບແນວໃດຕໍ່ກັບຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນຊັບພະຍາກອນປ່າໄມ້, ດັ່ງນັ້ນການສຶກສາຄົ້ນຄວ້າໃນຫົວນີ້ ຈຶ່ງມີຄວາມເໝາະສົມເພື່ອເຮັດໃຫ້ບັນຫາ ແລະ ຂໍ້ສົງໃສຕ່າງໆກ່ຽວກັບການສຳປະທານທີ່ດິນຕໍ່ກັບປ່າໄມ້ໃຫ້ຮູ້ຢ່າງຈະແຈ້ງ ແລະ ເປັນທີ່ເຂົ້າໃຈກັນຂຶ້ນຕື່ມ.

ການສຳປະທານທີ່ດິນສ່ວນຫຼາຍແມ່ນຈະສຳປະທານຂະໜາດໃຫຍ່ ແລະ ມີການບຸກເບີກທີ່ດິນເປັນບໍລິເວນກວ້າງ ໃນບາງກໍລະນີການສຳປະທານກໍ່ບໍ່ມີການປະເມີນຜົນກະທົບ ຫຼື ບໍ່ມີການສຳຫຼວດກ່ອນການສຳປະທານ ແລະ ບາງກໍ່ລະນີຜູ້ໄດ້ຮັບການສຳປະທານກໍ່ບໍ່ໄດ້ປະຕິບັດຕາມສັນຍາ, ລະບຽບຫຼັກການ, ກົດໝາຍ ແລະ ມີການບຸກລຸກເຂົ້າເນື້ອທີ່ປ່າໄມ້ຕ່າງໆຂອງບ້ານ (ນັນທະວົງ, 2009), ເຊິ່ງບັນຫາທີ່ກ່າວມານີ້ມັນອາດສົ່ງຜົນກະທົບເຮັດໃຫ້ຊັບພະຍາກອນປ່າໄມ້ກໍ່ຄືຊະນິດພັນຂອງໄມ້ ແລະ ເຄື່ອງປ່າຂອງດົງໃນທ້ອງຖິ່ນມີການປ່ຽນແປງ. ຍ້ອນບັນຫາທີ່ກ່າວມາຂ້າງເທິງນັ້ນໄດ້ເຮັດໃຫ້ພວກຂ້າພະເຈົ້າມີຄວາມສົນໃຈ ຈຶ່ງໄດ້ເກີດມີການສຶກສາຄົ້ນຄວ້າໃນຄັ້ງນີ້ຂຶ້ນມາ.

ຈຸດປະສົງຫຼັກຂອງການສຶກສາໃນຄັ້ງນີ້ ແມ່ນປະເມີນການປ່ຽນແປງສະຖານະພາບຂອງຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງກ່ອນ ແລະ ຫຼັງມີການສຳປະທານທີ່ດິນ ແລະ ປະເມີນທັດສະນະຂອງປະຊາຊົນຕໍ່ກັບການສຳປະທານທີ່ດິນ (ຕໍ່ກັບເສດຖະກິດ, ສັງຄົມ, ການນຳໃຊ້ທີ່ດິນ ແລະ ການນຳໃຊ້ຫ້ວຍນ້ຳລຳເຊ). ເພື່ອໃຫ້ບັນລຸຈຸດປະສົງດັ່ງກ່າວ ຈຶ່ງໄດ້ຕັ້ງຄຳຖາມຄົ້ນຄວ້າສອງຄຳຖາມຄື: (1)

ພາຍຫຼັງການສຳປະທານທີ່ດິນ ສະຖານະພາບຂອງຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງໃນສອງບ້ານດັ່ງກ່າວ ປ່ຽນແປງຄືແນວໃດ? ແລະ ພາຍຫຼັງມີການສຳປະທານທີ່ດິນປະຊາຊົນມີທັດສະນະຄືແນວໃດເຊັ່ນ: ດ້ານເສດຖະກິດ-ສັງຄົມ, ການນຳໃຊ້ທີ່ດິນ ແລະ ແຫຼ່ງນ້ຳຂອງທັງສອງບ້ານ?.

ສຳລັບບົດລາຍງານສະບັບນີ້ແມ່ນຈະຈັດອອກເປັນ 4 ພາກຄື: ພາກທີໜຶ່ງແມ່ນພາກສະໜີ (ດັ່ງຂ້າງເທິງນີ້), ພາກທີສອງແມ່ນວິທີການສຶກສາ, ພາກທີສາມແມ່ນຜົນໍາໄດ້ຮັບຈາກການສຶກສາ ແລະ ພາກທີສີ່ແມ່ນສະຫຼຸບ.

## ພາກທີ II: ວິທີການສຶກສາ (Research Methodlogy)

ການເກັບກຳຂໍ້ມູນ ແມ່ນໄດ້ເກັບກຳຂໍ້ມູນດ້ວຍວິທີການລວບລວມເອົາບັນດາເອກະສານຕ່າງໆ ທີ່ມີເນື້ອໃນພົວພັນ ແລະ ກ່ຽວຂອງກັບຫົວບົດສຶກສາຄົ້ນຄວ້າ ໃນການເກັບກຳຂໍ້ມູນໃນພາກນີ້ແມ່ນໄດ້ມີການພົວພັນເອົາບັນດາເອກະສານຈາກພາກສ່ວນຕ່າງໆຄື: ອົງການຈັດຕັ້ງໃນລະດັບບ້ານ, ລະດັບເມືອງ, ລະດັບແຂວງ, ຫໍສະໝຸດ ຕ່າງໆ ແລະ ພາກສ່ວນຕ່າງໆ. ຈາກນັ້ນການເກັບກຳຂໍ້ມູນຍັງໄດ້ລົງໄປໃນບ້ານເປົ້າໝາຍເພື່ອທຳການສຳພາດປະຊາຊົນ ແລະ ອົງການຈັດຕັ້ງຂອງບ້ານ ໂດຍໃຊ້ແບບຟອມສອບຖາມເປັນເຄື່ອງມືໃນການເກັບກຳຂໍ້ມູນເຊິ່ງມີ 2 ແບບ ຄື: ແບບຟອມສອບຖາມຄອບຄົວ ແລະ ອົງການຈັດຕັ້ງບ້ານ, ການສຳພາດກຸ່ມຄອບຄົວແມ່ນສຳພາດ 50% ຂອງຄອບຄົວທັງໝົດ, ເຊິ່ງບ້ານ ຕະຮວກ ຖືກສຳພາດທັງ 54 ຄອບຄົວ ຈາກຈຳນວນຄອບຄົວທັງໝົດ 113 ຄອບຄົວ ແລະ ບ້ານ ປະຈຸດອນ ແມ່ນຖືກສຳພາດ 64 ຄອບຄົວ ຈາກຈຳນວນຄອບຄົວທັງໝົດ 125 ຄອບຄົວ. ສ່ວນການສຳພາດອົງການຈັດຕັ້ງບ້ານແມ່ນສຳພາດດ້ວຍແບບຟອມສອບຖາມເຊັ່ນດຽວກັນ. ໃນການເກັບກຳຂໍ້ມູນເພື່ອປະເມີນການປ່ຽນແປງສະຖານະພາບຂອງຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງ ແລະ ການປະເມີນທັດສະນະຂອງປະຊາຊົນ ພາຍຫຼັງມີການສຳປະທານທີ່ດິນທີ່ມີຜົນກະທົບຕໍ່ເສດຖະກິດ, ສັງຄົມ, ການນຳໃຊ້ທີ່ດິນ ແລະ ນ້ຳນັ້ນ ການເກັບກຳຂໍ້ມູນເພື່ອມາປະເມີນແມ່ນໄດ້ຈາກການສຳພາດອົງການຈັດຕັ້ງບ້ານ ແລະ ກຸ່ມຄອບຄົວເປົ້າໝາຍ.

ການຄັດເລືອກ ຫຼື ກຳນົດບ້ານເປົ້າໝາຍ ແມ່ນຈະຄັດເລືອກເອົາບ້ານທີ່ມີບໍລິສັດ ຫຼື ໂຄງການເຂົ້າມາສຳປະທານທີ່ດິນເພື່ອປູກໄມ້ ຫຼື ປູກພືດອຸດສະຫະກຳ ແລະ ເປັນບ້ານທີ່ນອນໃນກຸ່ມບ້ານເປົ້າໝາຍຂອງໂຄງການທີ່ຕ້ອງການຢາກປະເມີນຜົນກະທົບ ຈາກການສຳປະທານທີ່ດິນຕໍ່ກັບຊັບພະຍາກອນປ່າໄມ້ໂດຍສະເພາະແມ່ນຕໍ່ກັບປ່າໄມ້.

ເມື່ອໄດ້ເກັບກຳຂໍ້ມູນເປັນທີ່ຄົບຖວນສົມບູນແລ້ວ ຈະໄດ້ມີການສັງລວມຂໍ້ມູນຕ່າງໆຈາກຟອມສຳພາດໃນລະດັບຂັ້ນຄອບຄົວ ແລະ ຂັ້ນບ້ານ (ອົງການຈັດຕັ້ງບ້ານ), ມີການຄິດໄລ່, ມີການສົມທຽບ ແລະ ມີການວິເຄາະບໍ່ວ່າຈະເປັນທາງດ້ານປະລິມານ ແລະ ດ້ານຄຸນນະພາບ ເພື່ອເປັນຕົວຊີ້ວັດ ແລະ ອ້າງອີງໃຫ້ແກ່ບັນຫາ ແລະ ສາເຫດຕ່າງໆທີ່ເກີດຂື້ນ, ໃນການວິເຄາະນັ້ນຍັງໄດ້ນຳໃຊ້ໂປຼແກມທາງສະຖິຕິເຂົ້າຊ່ວຍ.

## ພາກທີ III: ຜົນການສຶກສາ (Result and Discussion)

❖ **ຊະນິດພັນໄມ້ ແລະ ສະຖານະພາບຂອງມັນກ່ອນການສຳປະທານ.**

ຈາກການສຳພາດປະຊາຊົນ ບ້ານ ຕະຮວກ ຈຳນວນ 50% ເຊິ່ງເທົ່າກັບ 54 ຄອບຄົວ ຂອງຈຳນວນຄອບຄົວທັງໝົດ, ໃນຈຳນວນ 54 ຄອບຄົວເຊິ່ງເທົ່າ 100% ແມ່ນໃຫ້ຄຳເຫັນ ແລະ ບອກວ່າ ຊະນິດພັນໄມ້ທີ່ປະຊາຊົນ ບ້ານ ຕະຮວກ ເຄີຍນຳໃຊ້, ມີຄຸນຄ່າ ແລະ ມີໜ້ອຍ ຫຼື ໃກ້ຈະສູນພັນນັ້ນ ແມ່ນ ມີ 5 ຊະນິດຄື: ໄມ້ບາກ, ໄມ້ຕີນເປັດ, ໄມ້ບົງ, ໄມ້ແຄນ ແລະ ໄມ້ແຕ້ຮໍ, ສຳລັບໄມ້ທີ່ມີສະຖານະພາບຢູ່ໃນລະດັບປານກາງແມ່ນລວມທັງໝົດມີ 6 ຊະນິດຄື: ໄມ້ຈິກ, ໄມ້ຊາດ, ໄມ້ມູກ, ໄມ້ເປືອຍ, ໄມ້ຕິ້ວ ແລະ ໄມ້ກະໂດນ, ສ່ວນຊະນິດພັນໄມ້ທີ່ຢູ່ໃນສະຖານະຫຼາຍແມ່ນມີພຽງຊະນິດດຽວຄື ໄມ້ຄອມ.

ຈາກການສຳພາດປະຊາຊົນປະຊາຊົນ ບ້ານ ປະຈຸດອນ ຈຳນວນ 64 ຄອບຄົວ ເຊິ່ງເທົ່າກັບ 50% ຂອງຈຳນວນຄອບຄົວທັງໝົດ 125 ຄອບຄົວນັ້ນ ມີ 40 ຄອບຄົວ ເຊິ່ງເທົ່າກັບ 62.5% ໄດ້ໃຫ້ຄຳເຫັນວ່າ ຊະນິດພັນໄມ້ທີ່ປະຊາຊົນເຄີຍນຳໃຊ້ ແລະ ມີຄຸນຄ່ານັ້ນ ແມ່ນຢູ່ໃນສາມສະຖານະຄື: ຢູ່ໃນສະຖານະໜ້ອຍ ຫຼື ໃກ້ຈະສູນພັນນັ້ນແມ່ນ ມີ 7 ຊະນິດຄື: ໄມ້ ບາກ, ໄມ້ບົງ, ໄມ້ເປືອຍ, ໄມ້ດູ່, ໄມ້ແຄນ, ໄມ້ຂະຍູງ ແລະ ໄມ້ແຕ້ຮໍ, ສຳລັບໄມ້ທີ່ມີສະຖານະພາບຢູ່ໃນລະດັບປານກາງແມ່ນລວມທັງໝົດມີ 8 ຊະນິດຄື: ໄມ້ຈວງ, ໄມ້ກະຈະ, ໄມ້ກຸງ, ໄມ້ຮັງ, ໄມ້ຕີນເປັດ, ໄມ້ມູກ, ໄມ້ຊາດ ແລະ ໄມ້ຈິກ, ສ່ວນຊະນິດພັນໄມ້ທີ່ຢູ່ໃນສະຖານະຫຼາຍແມ່ນມີ 4 ຊະນິດຄື: ໄມ້ຍາງ, ໄມ້ກະໂດນ, ໄມ້ຄອມ ແລະ ໄມ້ຕິ້ວ.

❖ **ການປ່ຽນແປງຂອງຊະນິດພັນໄມ້ພາຍຫຼັງມີການສຳປະທານທີ່ດິນ**

ຈາກການສຳພາດປະຊາຊົນຈຳນວນ 50% ເຊິ່ງເທົ່າກັບ 54 ຄອບຄົວ ຂອງຈຳນວນຄອບຄົວທັງໝົດ, ໃນຈຳນວນ 54 ຄອບຄົວເຊິ່ງເທົ່າ 100% ແມ່ນໃຫ້ຄຳເຫັນ ແລະ ບອກວ່າກ່ອນ ແລະ ຫຼັງມີການສຳປະທານທີ່ດິນ ຊະນິດພັນໄມ້ແມ່ນບໍ່ມີການປ່ຽນແປງ ແລະ ຈຳນວນຊະນິດພັນໄມ້ແມ່ນຍັງຄືເກົ່າເຫດຜົນຍ້ອນວ່າ ບໍລິສັດທີ່ມາສຳປະທານທີ່ດິນເພື່ອປູກມັນຕົ້ນນັ້ນໄດ້ເຂົ້າມາສຳປະທານທີ່ດິນໃນຊ່ວງກາງປີ 2010 ແຕ່ພໍມາຮອດປັດຈຸບັນນີ້ (ປີ 2011) ບໍລິສັດດັ່ງກ່າວແມ່ນໄດ້ຢຸດຕິການບຸກເບີກທີ່ດິນທີ່ຈະປູກມັນຕົ້ນນັ້ນ ແລະ ທາງບ້ານຈະຍົກເລີກສັນຍາການໃຫ້ເຊົ່າສຳປະທານທີ່ດິນພາຍໃນຂອບເຂດບ້ານຂອງຕົນ ຄືຈະບໍ່ອະນຸຍາດໃຫ້ບໍລິສັດດັ່ງກ່າວເຂົ້າມາເຄື່ອນໄຫວການຜະລິດອີກ ເພາະທາງບໍລິສັດໄດ້ເຮັດຜິດສັນຍາຕໍ່ກັບປະຊາຊົນຄື: ບໍລິສັດຈະຊ່ວຍບຸກເບີກເນື້ອທີ່ດິນລວມຂອງບ້ານທີ່ເປັນປ່າເຫຼົ່າ ແລະ ໃຫ້ທາງບ້ານແບ່ງເນື້ອທີ່ດິນໃຫ້ປະຊາຊົນແຕ່ລະຄອບຄົວເພື່ອປູກມັນຕົ້ນ ແລະ ບໍລິສັດຈະໃຫ້ແນວພັນ, ວິຊາການ ແລະ ເປັນຜູ້ຮັບຊື້ມັນທີ່ປູກນັ້ນ. ຫຼັງຈາກນັ້ນ, ບໍລິສັດກໍ່ໄດ້ບຸກເບີກດິນລວມ ດັ່ງກ່າວໄດ້ປະມານ 8 ເຮັກຕາ ກໍ່ໄດ້ເຊົາ ແລະ ບໍ່ໄດ້ມີການເຄື່ອນໄຫວຫຍັງອີກຈົນມາຮອດ

ປັດຈຸບັນນີ້ກໍບໍ່ໄດ້ມີການເຄື່ອນໄຫວຫຍັງໝົດ ໃນການບຸກເບີກນັ້ນເປັນການບຸກເບີກໃນເບື້ອງຕົ້ນ (ບໍ່ລະອຽດ, ໄມ້ໄລ່ ແລະ ໄມ້ທີ່ມີຂະໜາດໃຫຍ່ແມ່ນບໍ່ຖືກໂຄ່ນ). ດັ່ງນັ້ນຈຶ່ງເຮັດໃຫ້ສະຖານະພາບຂອງຊະນິດພັນໄມ້ຕ່າງໆນັ້ນບໍ່ມີການປ່ຽນແປງຍ້ອນເນື້ອທີ່ປ່າທີ່ນຳໃຊ້ໄມ້ (ປ່າເຫຼົ່າ) ນັ້ນຍັງຫຼາຍ, ການນຳໃຊ້ໄມ້ໃຊ້ສອຍຕ່າງໆແມ່ນຍັງປົກກະຕິ.

ຈາກການສຳພາດປະຊາຊົນ ບ້ານ ປະຈຸດອນ ຈຳນວນ 64 ຄອບຄົວ ເຊິ່ງເທົ່າກັບ 50% ຂອງຈຳນວນຄອບຄົວທັງໝົດ 125 ຄອບຄົວນັ້ນ ມີ 40 ຄອບຄົວ ເຊິ່ງເທົ່າກັບ 62.5% ໄດ້ໃຫ້ຄຳເຫັນວ່າພາຍຫຼັງທີ່ມີການສຳປະທານທີ່ດິນປະລິມານໄມ້ແມ່ນມີການປ່ຽນແປງ ຍ້ອນວ່າພື້ນທີ່ໆເຄີຍນຳໃຊ້ໄມ້ໃນເມື່ອກ່ອນ (ໄມ້ກົມທີ່ໃຊ້ເຮັດເຮືອນ, ເລົ້າເຂົ້າ ແລະ ອື່ນໆ) ທີ່ເປັນປ່າເຫຼົ່າ, ປ່າໄລ່ ແລະ ເປັນພື້ນທີ່ໆເຄີຍເຮັດໄຮ່ນັ້ນແມ່ນໄດ້ຖືກສຳປະທານໄປຈົນເກືອບໝົດ ແລະ ມັນໄດ້ເຮັດໃຫ້ການເຂົ້າຫາປ່າຊົມໃຊ້ຂອງບ້ານຖີ່ຂຶ້ນກວ່າເກົ່າ ໃນປັດຈຸບັນນີ້ປະຊາຊົນແມ່ນນຳໃຊ້ໄມ້ຕ່າງໆ ເພື່ອເຮັດເຮືອນ, ເລົ້າເຂົ້າ ແລະ ອື່ນໆນັ້ນ ແມ່ນນຳໃຊ້ສະເພາະໃນປ່ານຳໃຊ້ຂອງບ້ານ ແລະ ຫົວໄຮ່ປາຍນາເທົ່ານັ້ນເຊິ່ງບໍ່ພຽງພໍກັບຄວາມຕ້ອງການຂອງເຂົາເຈົ້າ. ສະນັ້ນ, ການນຳໃຊ້ໄມ້ໃຊ້ສອຍຕ່າງໆຕ້ອງໄດ້ໄປຂໍໃຊ້ບ້ານອື່ນ ຫຼື ແຫຼ່ງອື່ນໆອີກ, ໃນປັດຈຸບັນ ບ້ານແມ່ນໄດ້ອະນຸຍາດໃຫ້ປະຊາຊົນນຳໃຊ້ໄມ້ປ່ອງທຸກຊະນິດໃນປ່າສະຫງວນຂອງບ້ານ. ສ່ວນອີກ 24 ຄອບຄົວ ເຊິ່ງເທົ່າກັບ 37.5% ໄດ້ໃຫ້ຄຳເຫັນວ່າພາຍຫຼັງມີການສຳປະທານທີ່ດິນນັ້ນ ຊະນິດພັນໄມ້ ແລະ ປະລິມານໄມ້ແມ່ນບໍ່ມີການປ່ຽນແປງ ຍ້ອນວ່າປັດຈຸບັນບໍລິສັດທີ່ສຳປະທານທີ່ດິນນັ້ນແມ່ນກຳລັງບຸກເບີກທີ່ດິນເພື່ອປູກມັນຕົ້ນ (ບຸກເບີກໄດ້ປະມານ 5 ເຮັກຕາ) ເນື້ອທີ່ທີ່ໃຫ້ສຳປະທານນັ້ນເປັນປ່າເຫຼົ່າ ແລະ ປ່າໄລ່ເຊັ່ນດຽວກັນ ແລະ ເຂດທີ່ໃຫ້ສຳປະທານນັ້ນແມ່ນເປັນບ່ອນທີ່ປະຊາຊົນເຄີຍເຮັດໄຮ່ ແຕ່ວ່າເນື້ອທີ່ເປົ່າຫວ່າງ (ເນື້ອ ທີ່ປ່າເລົ່າ ແລະ ປ່າໄລ່ ຫຼື ເນື້ອທີ່ດິນກະສິກຳເປົ່າຫວ່າງ) ນັ້ນ ແມ່ນຍັງຫຼາຍຢູ່ເຊິ່ງພຽງພໍກັບຄວາມຕ້ອງການໃນການນຳໃຊ້ຂອງປະຊາຊົນ ນອກຈາກນັ້ນປະຊາຊົນແມ່ນຍັງມີປ່າຊົມໃຊ້ຂອງບ້ານໃນການນຳໃຊ້ອີກ.

### ❖ ຊະນິດ ແລະ ສະຖານະພາບຂອງເຄື່ອງປ່າຂອງດົງຊະນິດທີ່ເປັນພືດກ່ອນການສຳປະທານ

ຈາກການສຳພາດກຸ່ມຄອບຄົວ ບ້ານ ຕະຮວກ ຈຳນວນ 50% ເຊິ່ງເທົ່າກັບ 54 ຄອບຄົວ ຈາກຈຳນວນຄອບຄົວທັງໝົດ , ໃນຈຳນວນ 54 ຄອບຄົວ ເຊິ່ງເທົ່າກັບ 100% ໄດ້ໃຫ້ຄຳເຫັນເປັນສຽງດຽວກັນໝົດຄື: ສະຖານະພາບຂອງເຄື່ອງປ່າຂອງດົງຢູ່ໃນເຂດບ້ານເຂົາເຈົ້າແມ່ນຢູ່ໃນສາມສະຖານະຄື: ຢູ່ໃນສະຖານະຫຼາຍ, ປານກາງ ແລະ ໜ້ອຍ ຫຼື ໄກ້ຈະສູນພັນ. ຊະນິດພັນທີ່ຢູ່ໃນສະຖານະທີ່ຫຼາຍແມ່ນລວມມີ 4 ຊະນິດເຊິ່ງປະກອບມີຄື: ໜໍ່ໄລ່, ເຫັດຕ່າງໆ, ໝາກໄມ້ປ່າຕ່າງໆ ແລະ ກອຍປ່າ, ຊະນິດພັນທີ່ຢູ່ໃນສະຖານະປານກາງລວມທັງໝົດມີ 3 ຊະນິດຄື: ຄ່າປ່າ, ຜັກຕິ້ວ ແລະ ຜັກກະໂດນ ແລະ ຊະນິດພັນທີ່ຢູ່ໃນສະຖານະນ້ອຍຄືຍັງພົບເຫັນໜ້ອຍລວມທັງໝົດມີ 3 ຊະນິດຄື: ຫວາຍ, ຜັກກູດ ແລະ ໜໍ່ສ້ານ.

ຈາກການສຳພາດກຸ່ມຄອບຄົວຕົວຢ່າງ ບ້ານ ປະຈຸດອນ ຈຳນວນ 64 ຄອບຄົວ ໄດ້ໃຫ້ຄຳເຫັນວ່າ: ສະຖານະພາບຂອງເຄື່ອງປ່າຂອງດົງໃນ ບ້ານ ປະຈຸດອນ ກ່ອນມີການສຳປະທານທີ່ດິນນັ້ນ

ແມ່ນຢູ່ໃນ 2 ສະຖານະພາບຄື: ຢູ່ໃນລະດັບປານກາງ ແລະ ລະດັບທີ່ຫຼາຍ, ສະຖານະພາບຂອງເຄື່ອງປ່າຂອງດົງທີ່ຢູ່ໃນສະຖານະປານກາງນັ້ນແມ່ນມີ 5 ຊະນິດຄື: ໜໍ່ສ້ານ, ຄ່າປ່າ, ຫວາຍຂົມ ແລະ ຜັກກູດ, ສ່ວນສະຖານະພາບຂອງເຄື່ອງປ່າຂອງດົງທີ່ຢູ່ໃນລະດັບທີ່ຫຼາຍນັ້ນລວມທັງໝົດແມ່ນມີ 7 ຊະນິດຄື: ເຄື່ອງປ່າປະເພດທີ່ເປັນໝາກໄມ້ປ່າຊະນິດຕ່າງໆ, ກອຍ, ບອນປ່າ, ເຫັດຊະນິດຕ່າງໆ, ຜັກຕິ້ວ, ຜັກກະໂດນ ແລະ ໜໍ່ໄມ້ໄລ່.

❖ **ຊະນິດ ແລະ ສະຖານະຂອງເຄື່ອງປ່າຂອງດົງທີ່ເປັນສັດກ່ອນການສຳປະທານ**

ສະຖານະພາບຂອງເຄື່ອງປ່າຂອງດົງທີ່ເປັນສັດໃນຂອບເຂດ ບ້ານ ຕະຣອກ ກ່ອນການສຳປະທານນັ້ນ ແມ່ນຢູ່ໃນສາມສະຖານະເຊັ່ນດຽວກັນຄື: ຫຼາຍ, ປານກາງ, ແລະ ໜ້ອຍ ຫຼືໃກ້ຈະສູນພັນ ເຊິ່ງຊະນິດທີ່ມີສະຖານະທີ່ຍັງຫຼາຍລວມທັງໝົດແມ່ນມີ 11 ຊະນິດຄື: ຟານ, ໝູປ່າ, ກະຮອກດິນ, ກະແຕ, ໄກ່ປ່າ, ໜູ, ອົ້ນ, ບ່າງຫູດຳ, ກົບ, ຂຽດ ແລະ ອື່ງ, ຊະນິດພັນທີ່ຢູ່ໃນສະຖານະປານກາງລວມທັງໝົດມີ 2 ຊະນິດຄື:ໄກ້ ແລະ ເຫັນອົ້ມ ແລະ ຊະນິດພັນທີ່ຢູ່ໃນສະຖານະພາບໜ້ອຍລວມທັງໝົດມີ 6 ຊະນິດຄື: ໄກ່ຂວາ, ລີງ, ລິ່ນ, ເໝັ້ນ, ກວາງ ແລະ ເຍືອງ.

ຈາກການສຳພາດກຸ່ມຄອບຄົວ ບ້ານ ປະຈຸດອນ 64 ຄອບຄົວ ເຊິ່ງເທົ່າກັບ 50% ພົບວ່າ, ສະຖານະພາບເຄື່ອງປ່າຂອງດົງຊະນິດທີ່ເປັນສັດກ່ອນມີການສຳປະທານນັ້ນແມ່ນມີ 3 ສະຖານະຄື: ຫຼາຍ, ປານກາງ ແລະ ໜ້ອຍເຊັ່ນດຽວກັນກັບ ບ້ານ ຕະຣອກ, ເຊິ່ງຊະນິດພັນທີ່ຢູ່ໃນສະຖານະຫຼາຍມີຄື: ຟານເຫຼົ່າ, ໝູປ່າ, ໄກ້, ກະຮອກດິນ, ກະແຕ, ໄກ່ປ່າ, ເຫັນອົ້ມ, ໜູ, ອົ້ນໃຫຍ່, ບ່າງຫູດຳ, ກົບ, ຂຽດ ແລະ ອື່ງ, ສ່ວນເຄື່ອງປ່າຂອງດົງຊະນິດທີ່ເປັນສັດທີ່ຢູ່ໃນສະຖານະປ່ານກາງນັ້ນມີຄື: ກວາງ, ເຍືອງ, ລີງ, ລິ້ນງົວ ແລະ ເໝັ້ນ, ສຸດທ້າຍຊະນິດພັນເຄື່ອງປ່າຂອງດົງທີ່ຢູ່ໃນສະຖານະໜ້ອຍແມ່ນມີພຽງຊະນິດດຽວຄືໄກ່ຂວາຫຼວງ.

❖ **ການປ່ຽນແປງສະຖານະພາບຂອງເຄື່ອງປ່າຂອງດົງທີ່ເປັນພືດຫຼັງການສຳປະທານ.**

ຈາກການສຸ່ມຕົວຢ່າງເອົາປະຊາຊົນ ບ້ານ ຕະຣອກ ຈຳນວນ 54 ຄອບຄົວ ເຊິ່ງເທົ່າກັບ 50% ມາສຳພາດເພື່ອນຳມາວິເຄາະການປ່ຽນແປງສະຖານະພາບຂອງເຄື່ອງປ່າຂອງດົງທີ່ເປັນພືດ, ໃນຈຳ ນວນ 50 ຄອບຄົວ ເທົ່າກັບ 100% ນັ້ນທຸກຄອບຄົວແມ່ນໃຫ້ຄຳເຫັນວ່າກ່ອນ ແລະ ຫຼັງການສຳປະທານທີ່ດິນ ຈຳນວນຊະນິດ ແລະ ສະຖານະຂອງມັນແມ່ນບໍ່ມີການປ່ຽນແປງ ເພາະວ່າປະຊາຊົນໃນຈຳນວນ 54 ຄອບຄົວນັ້ນ ແມ່ນສາມາດຊອກຫາເຄື່ອງປ່າຂອງດົງຊະນິດຕ່າງໆທີ່ໄດ້ກ່າວມາຢູ່ຂ້າງເທິງນັ້ນໄດ້ຕາມປົກກະຕິ, ຍ້ອນເນື້ອທີ່ໆເຄີຍຫາເຄື່ອງປ່າຂອງດົງເຊັ່ນໜໍ່ໄມ້ໄລ່, ເຫັດ ແລະ ຜັກປ່າຕ່າງໆ ແມ່ນບໍ່ໄດ້ຖືກບຸກເບີກເປັນສ່ວນຫຼາຍ ແລະ ການບຸກເບີກນັ້ນແມ່ນບໍ່ໄດ້ບຸກເບີກປ່າໄມ້ໄລ່ ຫຼື ໄມ້ໄລ່ ແລະ ປະລິມານເຄື່ອງປ່າຂອງດົງແມ່ນບໍ່ທັນມີການປ່ຽນແປງ. ສະນັ້ນ, ປະຊາຊົນຈຶ່ງສາມາດຊອກຫາເຄື່ອງປ່າຂອງດົງໄດ້ຕາມປົກກະຕິຄືກັບຕອນກ່ອນບໍ່ມີການສຳປະທານ.

ສ່ວນ ບ້ານ ປະຈຸດອນນັ້ນ, ຈາກການສຳພາດກຸ່ມຄອບຄົວຢ່າງ 64 ຄອບຄົວ ເທົ່າກັບ 50%. ມີ 41 ຄອບຄົວ ເທົ່າກັບ 64.1% ໄດ້ໃຫ້ເຫດຜົນວ່າ ສາເຫດທີ່ເຮັດໃຫ້ປະລິມານເຄື່ອງປ່າຂອງດົງຫຼຸດລົງນັ້ນ ແມ່ນຍ້ອນທີ່ດິນທີ່ໃຫ້ສຳປະທານນັ້ນແມ່ນເປັນສະຖານທີ່ໆເຄີຍເກັບເຄື່ອງປ່າຂອງດົງໃນເມື່ອກ່ອນ ແຕ່ປັດຈຸບັນນີ້ພື້ນທີ່ດັ່ງກ່າວແມ່ນໄດ້ຖືກບຸກເບີກເປັນບໍລິເວນກວ້າງ ຈຶ່ງເຮັດໃຫ້ການເກັບເຄື່ອງປ່າຂອງດົງນັ້ນຫາຍາກຂຶ້ນກວ່າເກົ່າ ປະຊາຊົນແມ່ນສາມາດເກັບເຄື່ອງປ່າຂອງດົງໄດ້ໃນສະເພາະປ່າຊົມໃຊ້ຂອງບ້ານເທົ່ານັ້ນ ແລະ ເຮັດໃຫ້ການນຳໃຊ້ເຄື່ອງປ່າຂອງດົງໃນປ່າຊົມໃຊ້ຂອງບ້ານຖີ່ຂື້ນກວ່າເກົ່າ ເຊິ່ງມັນໄດ້ເຮັດໃຫ້ປະລິມານເຄື່ອງປ່າຂອງດົງໃນປ່າດັ່ງກ່າວຫຼຸດລົງກວ່າປົກກະຕິ, ອີກສາເຫດໜຶ່ງທີ່ເຮັດໃຫ້ເຄື່ອງປ່າຂອງດົງບາງຊະນິດຄື : ບອນປ່ານັ້ນຫຼຸດລົງຍ້ອນຜູ້ສຳປະທານທີ່ດິນນັ້ນໄດ້ມີການລ້ຽງສັດຄືໝູເປັນຈຳນວນຫຼວງຫຼາຍ ແລະ ຜູ້ສຳປະທານທີ່ດິນນັ້ນ ໄດ້ນຳເອົາເຄື່ອງປ່າຂອງດົງຊະນິດດັ່ງກ່າວນັ້ນມາລ້ຽງໝູ ຈິ່ງເຮັດໃຫ້ຈຳນວນຊະນິດເຄື່ອງປ່າຂອງດົງຊະນິດດັ່ງກ່າວຫຼຸດລົງຢ່າງໄວ ແລະ ປັດຈຸບັນແມ່ນຫາຍາກຫຼາຍ. ມີກຸ່ມຄອບຄົວຈຳນວນ 23 ຄອບຄົວ ເທົ່າ 35.9% ແມ່ນໄດ້ສະແດງຄຳເຫັນວ່າກ່ອນ ແລະ ຫຼັງມີການສຳປະທານທີ່ດິນຊະນິດ ແລະ ສະຖານະເຄື່ອງປ່າຂອງດົງແມ່ນບໍ່ມີການປ່ຽນແປງ ເຫດຜົນຍ້ອນວ່າເນື້ອທີ່ເກັບເຄື່ອງປ່າຂອງດົງໃນເມື່ອກ່ອນ ແລະ ໃນປັດຈຸບັນນັ້ນ ເມື່ອທຽບກັນແລ້ວແມ່ນຫຼຸດລົງໜ້ອຍໜຶ່ງ ເພາະໃນປັດຈຸບັນນີ້ຂອບເຂດທີ່ໃຫ້ສຳປະທານັ້ນແມ່ນກຳລັງຖືກບຸກເບີກ, ສະນັ້ນ ຈຶ່ງເຮັດໃຫ້ການເກັບເຄື່ອງປ່າຂອງດົງກ່ອນ ແລະ ຫຼັງແມ່ນບໍ່ມີການປ່ຽນແປງ.

❖ **ການປ່ຽນແປງສະຖານະພາບເຄື່ອງປ່າຂອງດົງທີ່ເປັນສັດພາຍຫຼັງມີການສຳປະທານ**

ຈາກການສັງລວມ ແລະ ວິເຄາະກຸ່ມຄອບຄົວຕົວຢ່າງ ບ້ານ ຕະຮວກ ຈຳນວນ 54 ຄອບຄົວ ເຊິ່ງເທົ່າກັບ 50%, ໄດ້ຜົນອອກມາວ່າຊະນິດ ແລະ ສະຖານະພາບຂອງເຄື່ອງປ່າຂອງດົງທີ່ເປັນສັດໃນຂອບເຂດ ບ້ານ ຕະຮວກ ຫຼັງມີການສຳປະທານນັ້ນ ແມ່ນບໍ່ມີການປ່ຽນແປງ (ຈຳນວນ 54 ຄອບຄົວ ເທົ່າກັບ 100% ບອກວ່າບໍ່ປ່ຽນແປງ), ເຫດຜົນທີ່ເຮັດໃຫ້ບໍ່ມີການປ່ຽນແປງຂອງເຂົາເຈົ້ານັ້ນແມ່ນມີລັກສະນະຄ້າຍຄືກັນກັບເຫດຜົນທີ່ເຮັດໃຫ້ບໍ່ມີການປ່ຽນແປງ ໃນຊະນິດເຄື່ອງປ່າຂອງດົງທີ່ເປັນພືດ ແຕ່ຍັງມີອີກເຫດຜົນໜຶ່ງຄື ໃນຂອບເຂດທີ່ໃຫ້ສຳປະທານນັ້ນເຖິງຈະເປັນຖິ່ນທີ່ຢູ່ອາໃສຂອງສັດບາງຊະນິດກໍ່ຕາມເຊັ່ນ: ໝູ, ນົກຕ່າງໆ, ກະຮອກ ແລະ ກະແຕ ແຕ່ເພາະເນື້ອທີ່ດັ່ງກ່າວແມ່ນໃກ້ທາງ ແລະ ຕິດກັບບ້ານ ເຊິ່ງພື້ນທີ່ຕ່າງໆເຫຼົ່ານັ້ນແມ່ນໄດ້ຖືກບຸກເບີກໄດ້ຈຳນວນໜ້ອຍໜຶ່ງເທົ່ານັ້ນ (ປະມານ 8 ເຮັກຕາ) ເຖິງຈະມີການບຸກເບີກໄປແລ້ວ 8 ເຮັກຕາ ແຕ່ສັດປ່າຕ່າງໆເຫຼົ່ານັ້ນແມ່ນຍັງສາມາດອາໃສຢູ່ໃນເຂດນັ້ນໄດ້ ແລະ ເນື້ອທີ່ສຳລັບລີ້ຊ້ອນ ຫຼື ອາໃສຢູ່ນັ້ນແມ່ນຍັງມີຫຼາຍ, ສະນັ້ນ ເມື່ອພື້ນທີ່ສຳລັບລີ້ຊ້ອນ ແລະ ອາໃສຢູ່ຍັງຫຼາຍຄືແນວນັ້ນ ໂອກາດຊຶ່ງທີ່ຈະຖືກພົບເຫັນ ແລະ ຖືກລ່ານັ້ນແມ່ນມີໜ້ອຍ ຖ້າຫາກວ່າມີການຫຼຸດລົງຂອງປະລິມານສັດນັ້ນສາເຫດແມ່ນຍ້ອນການລ່າ ແລະ ການຖາງປ່າເຮັດໄຮ່ຂອງປະຊາຊົນເອງ, ປັດຈຸບັນປະຊາຊົນແມ່ນສາມາດຫາເຄື່ອງປ່າຂອງດົງທີ່ເປັນສັດທີ່ກ່າວມານັ້ນໄດ້ຄືເກົ່າ.

ຈາກການສຳພາດກຸ່ມຄອບຄົວຕົວຢ່າງ ບ້ານ ປະຈຸດອນ ໄດ້ໃຫ້ຄຳເຫັນວ່າພາຍຫຼັງທີ່ມີການສຳປະທານທີ່ດິນນັ້ນ ຈຳນວນສັດບາງຊະນິດພັນແມ່ນມີການປ່ຽນແປງຄືໄດ້ຫຼຸດລົງແມ່ນມີ 40 ຄອບຄົວ ເທົ່າກັບ 62.5% ທີ່ໃຫ້ຄຳເຫັນວ່າມີການປ່ຽນແປງ ແລະ ມີ 24 ຄອບຄົວທີ່ໃຫ້ຄຳເຫັນວ່າພາຍຫຼັງທີ່ມີການສຳປະທານທີ່ດິນນັ້ນ ແມ່ນບໍ່ປ່ຽນແປງ, ກຸ່ມຄອບຄົວທີ່ບອກວ່າພາຍຫຼັງມີການສຳປະທານທີ່ດິນສະຖານະພາບຂອງສັດປ່າໄດ້ມີການປ່ຽນແປງນັ້ນ ແມ່ນຍ້ອນການບຸກເບີກທີ່ດິນໃຫ້ເປີດແປນເປັນບໍລິເວນກວ້າງເປັນການທຳລາຍທີ່ຢູ່ອາໃສຂອງສັດປ່າໂດຍສະເພາະແມ່ນຟານເຫຼົ່າ, ໝູປ່າ, ກະຮອກ, ກະແຕ, ໄກ່ປ່າ, ອົ້ນ, ໄກ້ ແລະ ອື່ນໆທີ່ອາໃສຢູ່ໃນເຂດດັ່ງກ່າວ ແລະ ເຮັດໃຫ້ສັດຕ່າງໆເຫຼົ່ານັ້ນອົບພະຍົບໄປຢູ່ບ່ອນໃໝ່ ແລະ ເຂດທີ່ໃຫ້ສຳປະທານນັ້ນແມ່ນເປັນປະເພດປ່າເຫຼົ່າ ແລະ ປ່າໄລ່ ເຊິ່ງເປັນຖິ່ນທີ່ຢູ່ອາໃສຂອງສັດປ່າທີ່ກ່າວມານັ້ນ, ເຮັດໃຫ້ໂອກາດທີ່ຈະພົບເຫັນສັດມີຫຼາຍ ເຊິ່ງເປັນຄວາມຊ່ຽງທີ່ຈະຖືກລ່າໄດ້ງ່າຍ. ສ່ວນກຸ່ມຄອບຄົວທີ່ບອກວ່າພາຍຫຼັງມີການສຳປະທານທີ່ດິນສະຖານະຂອງສັດປ່າແມ່ນບໍ່ມີການປ່ຽນແປງ (ຫຼຸດລົງ) ແມ່ນຍ້ອນເນື້ອທີ່ດິນທີ່ໃຫ້ສຳປະທານນັ້ນ ປັດຈຸບັນແມ່ນກຳລັງຖືກບຸກເບີກໄດ້ເປັນຄັ້ງທຳອິດ ແລະ ບຸກເບີກໄດ້ໜ້ອຍໜຶ່ງ ແລະ ເນື້ອທີ່ໆເປັນບ່ອນທີ່ຢູ່ອາໃສ (ປ່າເຫຼົ່າ ແລະ ປ່າໄລ່) ແມ່ນຍັງຫຼາຍ. ດັ່ງນັ້ນ, ການເພີ່ມຂຶ້ນ ຫຼື ຫຼຸດລົງຂອງສັດ ປ່ານັ້ນບໍ່ແມ່ນຍ້ອນການສຳປະທານທີ່ດິນ ເພາະເນື້ອທີ່ໆເປັນບ່ອນລີ້ຊ້ອນ ແລະ ອາໃສຢູ່ນັ້ນແມ່ນຍັງມີຫຼາຍ, ປັດຈຸບັນເນື້ອທີ່ໆໃຫ້ສຳປະທານນັ້ນແມ່ນກຳລັງຖືກບຸກເບີກໄດ້ໜ່ອຍໜຶ່ງ ແລະ ໂອກາດທີ່ຈະຖືກພົບເຫັນ ແລະ ຖືກລ່າແມ່ນມີໜ້ອຍ.

- **ການນຳໃຊ້ເຄື່ອງປ່າຂອງດົງຂອງປະຊາຊົນຂອງທັງສອງບ້ານ**

ການນຳໃຊ້ເຄື່ອງປ່າຂອງດົງຂອງປະຊາຊົນແມ່ນສາມາດນຳໃຊ້ໄດ້ທຸກຊະນິດ ແຕ່ຕ້ອງການນຳໃຊ້ຕ້ອງໃຫ້ຖືກຕາມລະບຽບການຂອງບ້ານ ດັ່ງທີ່ໄດ້ກ່າວໄປແລ້ວຢູ່ໃນລະບຽບການນຳໃຊ້ເຄື່ອງປ່າຂອງດົງ (ຂໍ້ທີ 3.1.9, ຂໍ້ ຂ. ລະບຽບ ແລະ ການຄຸ້ມຄອງການນຳໃຊ້ເຄື່ອງປ່າຂອງດົງ) ການນຳໃຊ້ເຄື່ອງປ່າຂອງດົງນັ້ນແມ່ນມີສອງລັກສະນະຄື: ກິນຢ່າງດຽວ ແລະ ກິນ-ຂາຍ, ເຊິ່ງຈຳນວນຄອບຄົວຜູ້ນຳໃຊ້ເຄື່ອງປ່າຂອງດົງເພື່ອກິນຢ່າງດຽວ ແລະ ກິນ-ຂາຍ ເຊິ່ງຊະນິດທີ່ນຳໃຊ້ເພື່ອກິນ ແລະ ຂາຍນັ້ນສ່ວນຫຼາຍແມ່ນເປັນປະເພດພືດ ແລະ ສັດນ້ອຍເຊັ່ນ: ໜໍ່ໄມ້ໄລ່, ກະຮອກ, ກະແຕ, ອົ້ນ, ໄກ່ປ່າ, ເຫັນອົ້ມ, ໝູ, ລິ່ນງົວ, ກົບ, ຂຽດ, ອີ່ງ ແລະ ປ່າງຫູດຳ ເຊິ່ງມູນຄ່າລວມທັງໝົດທີ່ໄດ້ຈາກການຂາຍເຄື່ອງປ່າຂອງດົງລວມທັງໝົດແມ່ນ 300,000 ກີບ, ສະເລ່ຍຕໍ່ຄອບຄົວທີ່ຫາເຄື່ອງປ່າຂອງດົງມາຂາຍແມ່ນເທົ່າກັບ 150,000 ກີບຕໍ່ຄອບຄົວ. ສ່ວນປະເພດທີ່ໃຊ້ກິນຢ່າງດຽວນັ້ນແມ່ນເປັນປະເພດສັດໃຫຍ່ມີຄື: ກວາງ, ໝູປ່າ, ລິງ, ຟານເຫຼົ່າ, ໄກ້, ເໝັ້ນ ແລະ ເຍືອງ.

ສ່ວນ ບ້ານ ປະຈຸດອນ ກໍ່ເຊັ່ນດຽວກັນການນຳໃຊ້ເຄື່ອງປ່າຂອງດົງຂອງປະຊາຊົນນັ້ນແມ່ນສາມາດນຳໃຊ້ໄດ້ທຸກຊະນິດພັນສັດ ຍົກເວັ້ນແຕ່ຊະນິດພັນສັດທີ່ໄດ້ລະບຸໄວ້ໃນລະບຽບການນຳໃຊ້ເຄື່ອງປ່າຂອງດົງຂອງບ້ານ, ລັກສະນະການນຳໃຊ້ແມ່ນຄ້າຍຄືກັນກັບ ບ້ານ ຕະຮອກ ຄື: ນຳໃຊ້ເຄື່ອງປ່າຂອງດົງເພື່ອກິນຢ່າງດຽວ ແລະ ເພື່ອກິນ-ຂາຍ ແຕ່ວ່າປະລິມານຄອບຄົວທີ່ນຳໃຊ້ເຄື່ອງປ່າຂອງດົງ

ເພື່ອກິນ ແລະ ຂາຍນັ້ນແມ່ນມີຫຼາຍກວ່າ, ຈຳນວນຄອບຄົວທີ່ນຳໃຊ້ເຄື່ອງປ່າຂອງດົງເພື່ອກິນຢ່າງດຽວ ແລະ ເພື່ອກິນ ແລະ ຂາຍ. ເຊິ່ງຊະນິດທີ່ໃຊ້ສຳລັບກິນຢ່າງດຽວນັ້ນແມ່ນມີພຽງສະນິດດຽວຄືໝູປ່າ, ສ່ວນສັດປ່າທີ່ສາ ມາດກິນ ແລະ ຂາຍໄດ້ແມ່ນປະກອບມີຄື: ໄກ່ປ່າ, ໝູ, ກະຮອກ, ກະແຕ, ບ່າງ ຫູດຳ, ອົ້ນ, ເຫັນອົ້ມ ກົບ, ຊຸດ, ອຶ່ງ ແລະ ໜໍ່ໄມ້ໄລ່ ເຊິ່ງມູນຄ່າລວມທັງໝົດທີ່ໄດ້ຈາກການຂາຍເຄື່ອງປ່າຂອງດົງແມ່ນ 3,510,000 ກີບ, ສະເລ່ຍຕໍ່ຄອບຄົວທີ່ຫາເຄື່ອງປ່າຂອງດົງເພື່ອຂາຍນັ້ນແມ່ນ 125,357.14 ກີບຕໍ່ຄອບຄົວ.

❖ **ການນຳໃຊ້ທີ່ດິນກ່ອນການສຳປະທານ**

ໃນເມື່ອກ່ອນ (ກ່ອນບໍ່ທັນມີການສຳປະທານທີ່ດິນ) ພື້ນທີ່ດິນຂອງທັງສອງບ້ານນັ້ນ ສ່ວນຫຼາຍແມ່ນເປັນພື້ນທີ່ດິນກະສິກຳ ເຊິ່ງເປັນພື້ນທີ່ໆປະຊາຊົນທັງສອງບ້ານໃຊ້ໃນການທຳການຜະລິດກະສິກຳ (ເຮັດໄຮ່ເຂົ້າ) ພ້ອມດຽວກັນນັ້ນ ພື້ນທີ່ດັ່ງກ່າວຍັງເປັນບ່ອນເກັບເຄື່ອງປ່າຂອງດົງຂອງປະຊາຊົນ (ສັດ ແລະ ພືດບາງຊະນິດ) ແລະ ໄມ້ໃຊ້ສອຍຕ່າງໆ ນອກຈາກນັ້ນແລ້ວທັງສອງບ້ານຍັງປະກອບມີເນື້ອທີ່ປ່າສະຫງວນຂອງບ້ານ, ເນື້ອທີ່ປ່າປ້ອງກັນ, ເນື້ອທີ່ປ່າຊົມໃຊ້, ເນື້ອທີ່ປ່າຊ້າ, ເນື້ອທີ່ດິນປຸກສ້າງ ແລະ ເນື້ອທີ່ອື່ນໆ ເຊິ່ງຂະໜາດເນື້ອທີ່ດິນແຕ່ລະປະເພດແມ່ນມີດັ່ງຕາຕະລາງລຸ່ມນີ້:

ຕາຕະລາງທີ 32: ການນຳໃຊ້ທີ່ດິນຂອງສອງບ້ານເປົ້າໝາຍກ່ອນການສຳປະທານ.

| ລດ | ປະເພດທີ່ດິນ | ຕະຮອກ (ເຮັກຕາ) | ເປັນ % | ປະຈຸດອນ (ເຮັກຕາ) | ເປັນ % | ລວມ (ເຮັກຕາ) | ສະເລຍ (ເຮັກຕາ) | ເປັນ % |
|---|---|---|---|---|---|---|---|---|
| 1 | ປ່າສະຫງວນ | 611.87 | 34.24 | 524.05 | 22.68 | 1,135.92 | 567.96 | 27.72 |
| 2 | ປ່າປ້ອງກັນ | 104.76 | 5.86 | 233.47 | 10.10 | 338.23 | 169.12 | 8.25 |
| 3 | ປ່າຊ້າ | 45.38 | 2.54 | 22.97 | 0.99 | 68.35 | 34.18 | 1.67 |
| 4 | ປ່າຊົມໃຊ້ | 101.65 | 5.69 | 66.00 | 2.86 | 167.65 | 83.83 | 4.09 |
| 5 | ທົ່ງຫຍ້າ | 0 | 0.00 | 155.44 | 6.73 | 155.44 | 77.72 | 3.79 |
| 6 | ດິນປຸງສ້າງ | 2.78 | 0.16 | 14.60 | 0.63 | 17.38 | 8.69 | 0.42 |
| 7 | ດິນແຮປຸກສ້າງ | 15.27 | 0.85 | 4.96 | 0.21 | 20.23 | 10.12 | 0.49 |
| 8 | ດິນກະສິກຳ | 891.24 | 49.88 | 1,273.30 | 55.10 | 2,164.54 | 1,082.27 | 52.82 |
| 9 | ດິນຄົມມະນາຄົມ | 13.83 | 0.77 | 12.26 | 0.53 | 26.09 | 13.05 | 0.64 |
| 10 | ດິນອຸດສາຫະກຳ | 0 | 0.00 | 3.92 | 0.17 | 3.92 | 1.96 | 0.10 |
| ລວມ | | 1,786.78 | 100 | 2,310.95 | 100 | 4,097.73 | 2,048.87 | 100 |

*ແຫຼ່ງຂໍ້ມູນ: ຈາກການສຳພາດອົງການຈັດຕັ້ງບ້ານໃນພາກສະໜາມ, 2011.*

❖ **ການນຳໃຊ້ທີ່ດິນຫຼັງການສຳປະທານ**

ໃນບ້ານຕະຮອກນັ້ນເນື້ອທີ່ດິນກະສິກຳເປົ່າຫວ່າງແມ່ນມີຫຼາຍກວ່າໝູ່ (783.24 ເຮັກຕາ, ກວມເອົາ 43.84% ຂອງເນື້ອທີ່ທັງໝົດ) ຮອງລົງມາແມ່ນເນື້ອທີ່ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຊົມໃຊ້ຕາມລຳດັບ ສ່ວນເນື້ອທີ່ໆໃຫ້ສຳປະທານລວມທັງໝົດແມ່ນ 108 ເຮັກຕາ ແຕ່ເນື້ອທີ່ໆໄດ້ບຸກເບີກໄປແລ້ວແມ່ນ (8 ເຮັກຕາ), ສວນຢູ່ບ້ານປະຈຸດອນ ເນື້ອທີ່ດິນທີ່ມີຂະໜາດໃຫຍ່ກວ່າໝູ່ແມ່ນເນື້ອທີ່ໆໃຫ້ສຳປະທານ ເນື້ອທີ່ໃຫ້ສຳປະທານລວມທັງໝົດແມ່ນ 1,000 ເຮັກຕາ ຊຶ່ງກວມເອົາ 44.19% ແຕ່ເນື້ອທີ່ໆໄດ້ບຸກເບີກໄປແລ້ວແມ່ນ 640 ເຮັກຕາ ເຊິ່ງກວມເອົາ 27.69% ຂອງເນື້ອທີ່ທັງໝົດ, ຮອງລົງມາແມ່ນເນື້ອທີ່ດິນປ່າສະຫງວນ, ເນື້ອທີ່ດິນປ່າປ້ອງກັນ, ເນື້ອທີ່ທົ່ງຫຍ້າ ແລະ ເນື້ອທີ່ປ່າຊົມໃຊ້ຂອງບ້ານຕາມລຳດັບ. ສຳລັບຂະໜາດເນື້ອທີ່ດິນປະເພດຕ່າງໆຂອງທັງສອງບ້ານພາຍຫຼັງທີ່ມີການສຳປະທານທີ່ດິນແມ່ນມີລາຍລະອຽດດັ່ງຕາຕະລາງລຸ່ມນີ້:

ຕາຕະລາງທີ 34: ການນຳໃຊ້ທີ່ດິນຂອງທັງສອງບ້ານພາຍຫຼັງທີ່ມີການສຳປະທານທີ່ດິນ

| ລດ | ປະເພດທີ່ດິນ | ຕະຮອກ (ເຮັກຕາ) | ເປັນ % | ປະຈຸດອນ (ເຮັກຕາ) | % | ລວມ (ເຮັກຕາ) | ສະເລຍ (ເຮັກຕາ) | ເປັນ % |
|---|---|---|---|---|---|---|---|---|
| 1 | ປ່າສະຫງວນ | 611.87 | 34.24 | 523 | 22.63 | 1134.87 | 567.44 | 27.69 |
| 2 | ປ່າປ້ອງກັນ | 104.76 | 5.86 | 233.47 | 10.10 | 338.23 | 169.12 | 8.25 |
| 3 | ປ່າຊ້າ | 45.38 | 2.54 | 22.97 | 0.99 | 68.35 | 34.18 | 1.67 |
| 4 | ປ່າຊົມໃຊ້ | 101.65 | 5.69 | 63.00 | 2.73 | 164.65 | 82.33 | 4.02 |
| 5 | ທົ່ງຫຍ້າ | 0 | 0.00 | 155.44 | 6.73 | 155.44 | 77.72 | 3.79 |
| 6 | ດິນປຸງສ້າງ | 2.78 | 0.16 | 14.60 | 0.63 | 17.38 | 8.69 | 0.42 |
| 7 | ດິນແຮປຸກສ້າງ | 15.27 | 0.85 | 4.96 | 0.21 | 20.23 | 10.12 | 0.49 |
| 8 | ດິນກະສິກຳ | 783.24 | 43.84 | 255.94 | 11.08 | 1,039.18 | 519.59 | 25.36 |
| 9 | ດິນຄົມມະນາຄົມ | 13.83 | 0.77 | 12.26 | 0.53 | 26.09 | 13.05 | 0.64 |
| 10 | ດິນອຸດສາຫະກຳ | 0 | 0.00 | 3.92 | 0.17 | 3.92 | 1.96 | 0.10 |
| 11 | ດິນສຳປະທານ1 | 8 | 0.45 | 640 | 27.69 | 648 | 324.00 | 15.81 |
| | ດິນສຳປະທານ2 | 100 | 5.60 | 381.41 | 16.50 | 481.41 | 240.71 | 11.75 |
| ລວມ | | 1,786.78 | 100 | 2,310.95 | 100 | 4,097.75 | 2,048.88 | 100.00 |

*ແຫຼ່ງຂໍ້ມູນ: ຈາກການສຳພາດອົງການຈັດຕັ້ງບ້ານໃນພາກສະໜາມ, 2011.*

ໝາຍເຫດ: ດິນສຳປະທານ 1 ແມ່ນເນື້ອທີ່ດິນສຳປະທານທີ່ມີການບຸກເບີກແລ້ວ, ດິນສຳປະທານ 2 ແມ່ນເນື້ອທີ່ດິນສຳປະທານທີ່ບໍ່ທັນໄດ້ບຸກເບີກ.

❖ ທັດສະນະຂອງປະຊາຊົນຕໍ່ກັບການສຳປະທານທີ່ດິນ (ດ້ານເສດຖະກິດ)

ພາຍຫຼັງທີ່ມີການສຳປະທານທີ່ດິນເກີດຂຶ້ນຢູ່ໃນ ບ້ານ ຕະຮວກ ຄືໄດ້ມີບໍລິສັດໜຶ່ງມາສຳປະທານທີ່ດິນເພື່ອປູກມັນຕົ້ນຢູ່ໃນເຂດບ້ານຂອງເຂົາເຈົ້າ, ທາງບໍລິສັດກັບປະຊາຊົນໄດ້ຕົກລົງກັນວ່າຖ້າຫາກທາງບ້ານກໍ່ຄືປະຊາຊົນຫາກອະນຸຍາດໃຫ້ບໍລິສັດສຳປະທານທີ່ດິນ ທາງບໍລິສັດຈະສົ່ງເສີມປະຊາຊົນທຸກຄອບຄົວໃຫ້ປູກມັນຕົ້ນ ໂດຍທາງບໍລິສັດຈະບຸກເບີກເນື້ອທີ່ດິນລວມຂອງບ້ານ ແລະ ໃຫ້ປະຊາຊົນແບ່ງປັນກັນ ຄອບຄົວລະ 1 ເຮັກຕາ ເພື່ອໃຫ້ປະຊາຊົນປູກມັນຕົ້ນ ແລະ ຈະຮັບຊື້ຜົນຜະລິດດັ່ງກ່າວ ແຕ່ມາຮອດປັດຈຸບັດນີ້ ການຈັດຕັ້ງແມ່ນບໍ່ເປັນໄປຕາມທີ່ສັນຍາກັນໄວ້ ທັງໆທີ່ທາງບ້ານກໍ່ຄືພໍ່ແມ່ປະຊາຊົນແມ່ນໄດ້ອະນຸຍາດໃຫ້ບໍລິສັດຈັດຕັ້ງວຽກງານດັ່ງກ່າວເປັນທີ່ຮຽບຮ້ອຍແລ້ວ ແຕ່ທາງບໍລິສັດແມ່ນໄດ້ບຸກເບີກທີ່ດິນລວມດັ່ງກ່າວນັ້ນໄດ້ປະມານ 8 ເຮັກຕາ ກໍ່ໄດ້ຍຸດຕິ, ເນື້ອທີ່ໆບໍລິສັດບຸກເບີກໃຫ້ນັ້ນແມ່ນບໍ່ພຽງພໍກັບຄວາມຕ້ອງການຂອງປະຊາຊົນ ຄືເນື້ອທີ່ແມ່ນມີຂະໜາດນ້ອຍບໍ່ສາມາດທີ່ຈະແບ່ງປັນໃຫ້ປະຊາຊົນແຕ່ລະຄອບຄົວໄດ້. ສະນັ້ນ, ປະຊາຊົນຈຶ່ງບໍ່ໄດ້ປູກມັນຕົ້ນ ແລະ ທາງບໍລິສັດກໍ່ບໍ່ໄດ້ມີການສົ່ງເສີມປະຊາຊົນປູກມັນຕົ້ນຈົນມາຮອດປັດຈຸບັນນີ້. ສະນັ້ນ, ພາຍຫຼັງທີ່ມີການສຳປະທານທີ່ດິນເກີດຂຶ້ນໄປແລ້ວນັ້ນ ກຸ່ມຄອບຄົວທີ່ຕົວຢ່າງທີ່ຖືກສຳພາດຈຳນວນ 54 ຄອບຄົວ ເທົ່າກັບ 100% ຈຶ່ງໄດ້ໃຫ້ຄຳເຫັນວ່າສະພາບເສດຖະກິດແມ່ນບໍ່ມີການປ່ຽນແປງ ຍ້ອນລາຍໄດ້ຂອງປະຊາຊົນທີ່ມາຈາກບໍລິສັດນັ້ນບໍ່ມີ, ຍ້ອນປະຊາຊົນບໍ່ໄດ້ເຂົ້າເຮັດວຽກນຳບໍລິສັດ ຫຼື ບໍ່ໄດ້ມີສ່ວນຮ່ວມໃນໜ້າວຽກຂອງບໍລິສັດຫຍັງເລີຍ, ການສຳປະທານທີ່ດິນນັ້ນແມ່ນບໍ່ໄດ້ມີຜົນຕໍ່ກັບການເກັບເຄື່ອງປ່າຂອງດົງມາຂາຍ ແລະ ບໍ່ໄດ້ທຳລາຍພື້ນທີ່ການທຳມາຫາກິນຂອງເຂົາເຈົ້າ ແລະ ຍ້ອນການຈັດຕັ້ງປະຕິບັດສັນຍາລະຫວ່າງບໍລິສັດກັບປະຊາຊົນບໍ່ເປັນໄປຕາມສັນຍາ ຫຼື ບໍ່ປະກົດຜົນເປັນຈິງ. ບໍລິສັດທີ່ເຂົ້າມາສຳປະທານທີ່ດິນນັ້ນກໍ່ບໍ່ໄດ້ຊ່ວຍພັດທະນາພື້ນຖານໂຄງລ່າງຂອງບ້ານຫຍັງເລີຍ, ສະນັ້ນກ່ອນ ແລະ ຫຼັງການສຳປະທານທີ່ດິນນັ້ນສະພາບພື້ນຖານໂຄງລ່າງແມ່ນບໍ່ມີການປ່ຽນແປງ.

ຈາກການສຳພາດກຸ່ມຄອບຄົວຕົວຢ່າງ ບ້ານ ປະຈຸດອນ ຈຳນວນ 64 ຄອບຄົວ ເທົ່າກັບ 50%, ມີ 48 ຄອບຄົວ ເຊິ່ງເທົ່າກັບ 75% ໄດ້ໃຫ້ຄຳເຫັນວ່າ ພາຍຫຼັງມີການສຳປະທານທີ່ດິນລາຍໄດ້ແມ່ນຄືເກົ່າ ແລະ ມີ 16 ຄອບຄົວ ເຊິ່ງເທົ່າກັບ 25% ມີລາຍຮັບຫຼຸດລົງ ແລະ ມີ 0 ຄອບຄົວ ເທົ່າກັບ 0% ມີຊີວິດດີຂຶ້ນ. ສາເຫດທີ່ເຮັດໃຫ້ລາຍໄດ້ຂອງເຂົາເຈົ້າຫຼຸດລົງ ເຂົາເຈົ້າໄດ້ໃຫ້ເຫດຜົນວ່າ: ປັດຈຸບັນນີ້ເຂົາເຈົ້າແມ່ນບໍ່ໄດ້ເຂົ້າເຮັດວຽກນຳບໍລິສັດທີ່ມາສຳປະທານທີ່ດິນນັ້ນ ຍ້ອນເຂົາເຈົ້າໄດ້ເອົາຄົນເຂົ້າເຮັດວຽກໜ້ອຍຫຼາຍ (ປະມານ 4-5 ຄົນຕໍ່ມື້) ເມື່ອໄດ້ເຂົ້າເຮັດວຽກແລ້ວບໍລິສັດບໍ່ຈ່າຍເງິນວັນ ຫຼື ເງິນເດືອນໃຫ້ ພ້ອມດຽວກັນນັ້ນຄ່າຈ້າງຊຳພັດຖືກຫຼາຍ ແລະ ອີກເຫດຜົນໜຶ່ງແມ່ນຍ້ອນລາຍໄດ້ຈາກການເກັບເຄື່ອງປ່າຂອງດົງໄປຂາຍນັ້ນໄດ້ຫຼຸດລົງ ເພາະເນື້ອທີ່ທີ່ຫາເຄື່ອງປ່າຂອງດົງຖືກທຳລາຍ, ສ່ວນກຸ່ມຄອບຄົວທີ່ບອກວ່າ ພາຍຫຼັງມີການສຳປະທານທີ່ດິນລາຍໄດ້ຂອງເຂົາເຈົ້າແມ່ນຄືເກົ່ານັ້ນ ເຂົາເຈົ້າກໍ່ບໍ່ໄດ້ເຂົ້າເຮັດວຽກນຳບໍລິສັດເຊັ່ນດຽວກັນ ດັ່ງນັ້ນຈຶ່ງບໍ່ມີລາຍໄດ້ຈາກບໍລິສັດຫຍັງເລີຍ, ສະນັ້ນປະຊາຊົນກຸ່ມດັ່ງກ່າວຈຶ່ງໃຫ້ເຫດຜົນວ່າ ເຖິງຈະມີ ຫຼື ບໍ່ມີບໍລິສັດເຂົ້າມາສຳປະທານທີ່ດິນ ເຂົາເຈົ້າແມ່ນສາມາດດຳລົງຊີວິດຢູ່ໄດ້ຕາມປົກກະຕິຄື: ສາມາດຫາເຄື່ອງປ່າຂອງດົງມານຳໃຊ້ພາຍໃນຄອບ

ຄົວ ແລະ ຂາຍໄດ້ ເພາະເຄື່ອງປ່າຂອງດົງ ແລະ ເນື້ອທີ່ສຳລັບເກັບເຄື່ອງປ່າຂອງດົງແມ່ນຍັງມີຫຼາຍຢູ່.

ນອກຈາກນັ້ນການສຳພາດກຸ່ມຄອບຄົວຕົວຢ່າງທັງສອງບ້ານ ເຂົາເຈົ້າຍັງໃຫ້ທັດສະນະກ່ຽວກັບຊີວິດການເປັນຢູ່ຂອງເຂົາເຈົ້າພາຍຫຼັງມີການສຳປທານທີ່ດິນ, ປະຊາຊົນບ້ານຕະຮວກ ຈຳນວນ 54 ຄອບຄົວ ເທົ່າກັບ 100% ບອກວ່າພາຍຫຼັງທີ່ມີການສຳປະທານຊີວິດການເປັນຢູ່ຂອງເຂົາເຈົ້າແມ່ນຄືເກົ່າ, ສ່ວນຄອບຄົວທີ່ບອກວ່າພາຍຫຼັງທີ່ມີການສຳປະທານທີ່ດິນ ຊີວິດການເປັນຢູ່ຂອງເຂົາເຈົ້າດີຂຶ້ນ ແລະ ຫຼຸດລົງນັ້ນແມ່ນບໍ່ມີ, ກຸ່ມຄອບຄົວທີ່ບອກວ່າຄືເກົ່ານັ້ນເຂົາເຈົ້າໄດ້ໃຫ້ເຫດຜົນວ່າການສຳປະທານທີ່ດີນັ້ນແມ່ນບໍ່ໄດ້ເຮັດໃຫ້ການຫາເຄື່ອງປ່າຂອງດົງ ແລະ ໄມ້ໃຊ້ສອຍຕ່າງໆຍາກຂຶ້ນ ເພາະເນື້ອທີ່ສຳລັບເກັບເຄື່ອງປ່າຂອງດົງ ແລະ ໄມ້ໃຊ້ສອຍແມ່ນຍັງມີຫຼາຍ. ສ່ວນບ້ານປະຈຸດອນມີ 28 ຄອບຄົວ ເທົ່າ 43.8% ບອກວ່າພາຍຫຼັງທີ່ມີການສຳປະທານທີ່ດິນຊີວິດການເປັນຢູ່ແມ່ນຍັງຄືເກົ່າ, ມີ 36 ຄອບຄົວ ເທົ່າກັບ 56.3% ບອກວ່າຫຼຸດລົງ ແລະ ສຳລັບຄອບຄົວທີ່ບອກວ່າດີຂຶ້ນແມ່ນບໍ່ມີ. ກຸ່ມຄອບຄົວທີ່ບອກວ່າຄືເກົ່ານັ້ນ ໄດ້ໃຫ້ເຫດຜົນວ່າ ເຖິງເຂົາເຈົ້າບໍ່ໄດ້ເຂົ້າເຮັດວຽກນຳບໍລິສັດທີ່ມາສຳປະທານທີ່ດິນກໍ່ຕາມ ແຕ່ເຂົາເຈົ້າສາມາດດຳລົງຊີວິດຢູ່ໄດ້ຕາມປົກກະຕິຄື: ສາມາດຫາເຄື່ອງປ່າຂອງດົງມານຳໃຊ້ພາຍໃນຄອບຄົວ ແລະ ຂາຍໄດ້ ເພາະເຄື່ອງປ່າຂອງດົງ ແລະ ເນື້ອທີ່ສຳລັບເກັບເຄື່ອງປ່າຂອງດົງແມ່ນຍັງມີຫຼາຍຢູ່. ສ່ວນກຸ່ມຄອບຄົວທີ່ບອກວ່າຫຼຸດລົງນັ້ນ ເຂົາເຈົ້າໄດ້ໃຫ້ເຫດຜົນວ່າປັດຈຸບັນນີ້ເຂົາເຈົ້າແມ່ນບໍ່ໄດ້ເຂົ້າເຮັດວຽກນຳບໍລິສັດທີ່ມາສຳປະທານທີ່ດິນ ຈຶ່ງເຮັດໃຫ້ຂາດລາຍໄດ້ ແລະ ຍ້ອນລາຍໄດ້ຈາກການເກັບເຄື່ອງປ່າຂອງດົງໄປຂາຍນັ້ນໄດ້ຫຼຸດລົງ ເພາະເນື້ອທີ່ທີ່ຫາເຄື່ອງປ່າຂອງດົງຖືກທຳລາຍ ການຫາເຄື່ອງປ່າຂອງດົງເພື່ອນຳມາກິນນັ້ນແມ່ນຫາຍາກຂຶ້ນກວ່າແຕ່ກ່ອນບໍ່ໄດ້ມີການສຳປະທານຫຼາຍ. ບໍລິສັດທີ່ເຂົ້າມາສຳປະທານທີ່ດິນໃນ ບ້ານ ປະຈຸດອນ ນັ້ນກໍ່ບໍ່ໄດ້ຊ່ວຍພັດທະນາ ຫຼື ບູລະນະພື້ນຖານໂຄງລາງຂອງບ້ານເຊັ່ນດຽວກັນກັບ ບ້ານ ຕະຮວກ ຊຳພັດບໍ່ຈ່າຍເງິນບູລະນະບ້ານໃຫ້ກັບບ້ານຕາມທີ່ສັນຍາກັນໃນເບື້ອງຕົ້ນ ຄືຈະຈ່າຍໃຫ້ທາງບ້ານ 1,00,000 ກີບຕໍ່ປີ.

### ❖ ທັດສະນະຂອງປະຊາຊົນຕໍ່ກັບການສຳປະທານທີ່ດິນ (ດ້ານສັງຄົມ)

ຈາກການສຳພາດກຸ່ມຄອບຄົວ ບ້ານ ຕະຮວກ ຈຳນວນ 54 ຄອບຄົວ ເທົ່າກັບ 50% ເຂົາເຈົ້າແມ່ນໃຫ້ທັດສະນະຕໍ່ກັບດ້ານສັງຄົມພາຍຫຼັງມີການສຳປະທານທີ່ດິນຂອງບໍລິສັດຄື: ມີກຸ່ມຄອບຄົວຈຳນວນ 3 ຄອບຄົວ ເຊິ່ງເທົ່າກັບ 5.6% ແມ່ນມີຄວາມພໍໃຈທີ່ບໍລິສັດດັ່ງກ່າວໄດ້ເຂົ້າມາສຳປະທານທີ່ດິນ ຍ້ອນເຂົາເຈົ້າຄິດວ່າຈະມີລາຍໄດ້ເຂົ້າຄອບຄົວ, ມີວຽກເຮັດງານທຳ ແລະ ຄຸນນະພາບຊີວິດຈະດີຂຶ້ນ, ມີ 43 ຄອວຄົວ ເທົ່າກັບ 79.6% ຄອບຄົວ ໄດ້ໃຫ້ທັດສະນະວ່າທຳມະດາທີ່ບໍລິສັດດັ່ງກ່າວເຂົ້າມາ ຍ້ອນເຂົາເຈົ້າຄິດວວ່າການທີ່ມີບໍລິສັດເຂົ້າມານີ້ແມ່ນບໍ່ໄດ້ເຮັດໃຫ້ຄຸນນະພາບຊີວິດດີຂຶ້ນ ແລະ ກໍ່ບໍ່ໄດ້ຫຼຸດລົງ ເພາະເຂົາເຈົ້າສາມາດດຳລົງຊີວິດໄດ້ຕາມປົກກະຕິໂດຍທີ່ບໍ່ມີບໍລິສັດ ແລະ ການສຳປະທານຄືການບຸກເບີກນັ້ນກໍ່ບໍ່ໄດ້ມີການບຸກລຸກເນື້ອທີ່ປ່າສັກສິດ, ປ່າຊ້າ ແລະ ປ່າສະຫງວນຂອງບ້ານທີ່ເປັນການເຮັດຜິດຕໍ່ຮີດຄອງຂອງເຂົາເຈົ້າ ແລະ ອີກ 8 ຄອບຄົວ ເທົ່າກັບ14.8% ໄດ້ໃຫ້

ທັດສະນະວ່າບໍ່ພໍໃຈທີ່ບໍລິສັດດັ່ງກ່າວເຂົ້າມາສຳປະທານທີ່ດິນ ຍ້ອນບໍລິສັດດັ່ງກ່າວນີ້ບໍ່ໄດ້ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນໃນເບື້ອງຕົ້ນຄືຈະສົ່ງເສີມໃຫ້ປະຊາຊົນປູກມັນຕົ້ນ, ຍ້ອນທີ່ດິນທີ່ບໍລິສັດບຸກເບີກນັ້ນແມ່ນບໍ່ສາມາດເຮັດໄຮ່ໃສ່ໄດ້ ແລະ ເປັນພື້ນທີ່ໆເຂົາເຈົ້າກຳລັງຈະເຮັດໄຮ່ໃນປີນີ້.

ຈາກການສຳພາດກຸ່ມຄອບຄົວຕົວຢ່າງ ບ້ານ ປະຈຸດອນ ຈຳນວນ 64 ຄອບຄົວ ເທົ່າກັບ 50%, ມີ 3 ຄອບຄົວ ເທົ່າກັບ 4.7% ໄດ້ເວົ້າວ່າມີຄວາມພໍໃຈທີ່ມີບໍລິສັດເຂົ້າມາສຳປະທານທີ່ດິນ ເຊິ່ງເຫດຜົນກໍ່ຄ້າຍກັນກັບບ້ານຕະຮວກຄື ຈະໄດ້ມີວຽກເຮັດງານທຳ ແລະ ລາຍໄດ້ເຂົ້າຄອບຄົວ, ມີ 20 ຄອບຄົວ ເທົ່າກັບ 31.3% ໄດ້ເວົ້າວ່າ ທຳມະດາທີ່ບໍລິສັດດັ່ງກ່າວເຂົ້າມາສຳປະທານທີ່ດິນ ເຊິ່ງປະຊາຊົນກຸ່ມນີ້ໄດ້ໃຫ້ເຫດຜົນວ່າຫຼັງຈາກທີ່ມີການສຳປະທານເຂົາເຈົ້າຍັງສາມາດທຳມາຫາກິນກໍ່ຄືຊອກເຄື່ອງປ່າຂອງດົງໄດ້ຕາມປົກກະຕິຄືກັບກ່ອນບໍ່ມີການສຳປະທານ ແລະ ເນື້ອທີ່ໃນການເກັບເຄື່ອງປ່າຂອງດົງແມ່ນຍັງມີຫຼາຍ ແລະ ມີ 41 ຄອບຄົວ ເທົ່າກັບ 64% ໄດ້ເວົ້າວ່າບໍ່ພໍໃຈທີ່ບໍລິສັດເຂົ້າມາສຳປະທານທີ່ດິນ ຍ້ອນການສຳປະທານທີ່ດິນນັ້ນໄດ້ທຳລາຍພື້ນທີ່ທຳມາຫາກິນ ໂດຍສະເພາະແມ່ນພື້ນທີ່ໃນການເກັບເຄື່ອງປ່າຂອງ ເນື່ອງຈາກວ່າເຂດທີ່ໃຫ້ສຳປະທານເປັນພື້ນທີ່ໆເກັບເຄື່ອງປ່າຂອງດົງໃນເມື່ອກ່ອນ ແຕ່ປັດຈຸບັນແມ່ນຖືກບຸກເບີກ.

ຈາກນັ້ນການສຳພາດກຸ້ມຄອບຄົວ ເຂົາເຈົ້າຍັງໃຫ້ທັດສະນະຕື່ມອີກວ່າ ພາຍຫຼັງທີ່ມີການສຳປະທານທີ່ດິນ ສະພາບຂອງບ້ານ ຫຼື ຄວາມເປັນຕາໜ້າຢູ່ຂອງບ້ານເຂົາເຈົ້ານັ້ນ ແມ່ນທຳມະດາໝາຍຄວາມວ່າກ່ອນ ແລະ ຫຼັງການສຳປະທານແມ່ນບໍ່ມີການປ່ຽນແປງຫຍັງ ຜູ້ທີ່ໄດ້ໃຫ້ຄຳຄິດເຫັນດັ່ງກ່າວນັ້ນແມ່ນມີ 54 ຄອບຄົວ ເທົ່າກັບ 100% (ບ້ານຕະຮວກ)

ສ່ວນປະຊາຊົນບ້ານປະຈຸດອນໄດ້ໃຫ້ທັດສະນະກ່ຽວກັບສະພາບຂອງບ້ານ ຫຼື ຄວາມເປັນຕາໜ້າຢູ່ພາຍຫຼັງມີການສຳປະທານຄື: ມີກຸ່ມຄອບຄົວຈຳນວນ 42 ຄອບຄົວ ເທົ່າກັບ 65.6% ບອກວ່າພາຍຫຼັງມີການສຳປະທານທີ່ດິນັ້ນ ສະພາບ ຫຼື ຄວາມເປັນຕາໜ້າຢູ່ຂອງບ້ານແມ່ນທຳມະດາ ຍ້ອນການສຳປະທານກໍ່ບໍ່ໄດ້ເຮັດໃຫ້ການຊອກຫາເຄື່ອງປ່າຂອງດົງ ແລະ ໄມ້ໃຊ້ສອຍຕ່າງໆນັ້ນຍາກຂື້ນໝາຍຄວາມວ່າ ກ່ອນ ແລະ ຫຼັງການສຳປະທານການນຳໃຊ້ແມ່ນບບໍ່ມີການປ່ຽນແປງ, ມີກຸ່ມຄອບຄົວຈຳນວນ 22 ຄອບຄົວ ເທົ່າກັບ 34.4% ບອກວ່າສະພາບ ຫຼື ຄວາມເປັນຕາໜ້າຢູ່ຂອງບ້ານເຂົາເຈົ້າບໍ່ເປັນຕາໜ້າຢູ່ຫຼັງມີການສຳປະທານ ເຫດຜົນແມ່ນຍ້ອນການສຳປະທານທີ່ດິນນັ້ນໄດ້ເຮັດໃຫ້ການຫາເຄື່ອງປ່າຂອງດົງ, ໄມ້ພື້ນ ແລະ ໄມ້ໃຊ້ສອຍນັ້ນຍາກຂື້ນ ເພາະເນື້ອທີ່ທີ່ເຄີຍຫາເຄື່ອງປ່າຂອງດົງ, ຟື້ນ ແລະ ໄມ້ໃຊ້ສອຍໄດ້ຖືກສຳປະທານສະນັ້ນຈຶ່ງເຮັດໃຫ້ການຊອກຫາສິ່ງເຫຼົ່ານັ້ນຍາກຂື້ນ.

- **ທັດສະນະຂອງປະຊາຊົນຕໍ່ກັບການສຳປະທານທີ່ດິນ (ດ້ານການນຳໃຊ້ທີ່ດິນ)**

ຈາກການສຳພາດກຸ່ມຄອບຄົວຕົວຢ່າງ ບ້ານ ຕະຮວກ ຈຳນວນ 54 ຄອບຄົວ ເຊິ່ງເທົ່າກັບ 50%, ມີ 48 ຄອບຄົວ ເທົ່າກັບ 85.2% ບວກວ່າໄດ້ຮັບຜົນກະທົບຈາກການນຳປະທານທີ່ດິນໃນການນຳໃຊ້ທີ່ດິນ ເພາະບໍລິເວນທີ່ບຸກເບີກເພື່ອຈະປູກມັນຕົ້ນນັ້ນ ແມ່ນບໍ່ສາມາດຈະເຮັດໄຮ່ປູກເຂົ້າໄດ້ ແລະ ເປັນພື້ນທີ່ທີ່ເຂົາເຈົ້າເຄີຍເຮັດໄຮ່ມາກ່ອນ ສະນັ້ນຕ້ອງໄດ້ອອກໄປເຮັດໃນບ່ອນໃໝ່ທີ່ໄກກວ່າ

ເກົ່າ. ມີ 8 ຄອບຄົວ ເທົ່າກັບ 14.8% ໄດ້ເວົ້າວ່າ ບໍ່ໄດ້ຮັບຜົນກະທົບຈາກການສຳປະທານໃນການນຳໃຊ້ທີ່ດິນ ເຂົາເຈົ້າໄດ້ໃຫ້ເຫດຜົນວ່າ ດິນບໍລິເວນທີ່ບຸກເບີກນັ້ນແມ່ນບໍ່ໄດ້ຖືກດິນຂອງເຂົ້າເຈົ້າ ແລະ ບໍ່ເຄີຍເຮັດໄຮ່ໃນພື້ນທີ່ດັ່ງກ່າວ.

ຈາກການສຳພາດກຸ່ມຄອບຄົວ ບ້ານ ປະຈຸດອນ ຈຳນວນ 64 ຄອບຄົວ ເຊິ່ງເທົ່າກັບ 50%, ມີ 22 ຄອບຄົວ ເທົ່າກັບ 34.4% ໄດ້ຮັບຜົນກະທົບຈາກການສຳປະທານ ເຂົາເຈົ້າໄດ້ໃຫ້ເຫດຜົນວ່າການສຳປະທານທີ່ດິນນັ້ນໄດ້ເຮັດໃຫ້ຜົນຜະລິດເຂົ້າໄຮ່ຂອງເຂົາເຈົ້າຫຼຸດລົງ ເພາະທີ່ດິນໄດ້ຖືກສຳປະທານເປັນຈຳນວນຫຼວງຫຼາຍ ເຂົາເຈົ້າແມ່ນນຳໃຊ້ທີ່ດິນທີ່ທາງບ້ານແບງໃຫ້ນັ້ນ ຈຶ່ງເຮັດໃຫ້ຮອບວຽນໃນການເຮັດໄຮ່ຫຼຸດລົງຫຼາຍ ສະນັ້ນຈຶ່ງເຮັດໃຫ້ຜົນຜະລິດເຂົ້າໄຮ່ຫຼຸດລົງ ແລະ ເນື້ອທີ່ດິນບາງຄອບຄົວນັ້ນ (ເນື້ອທີ່ສວນ, ໄຮ່ ແລະ ນາ) ໄດ້ຖືກສຳປະທານ ແລະ ທາງບໍລິສັດຈະຊົດເຊີຍໃຫ້ ແຕ່ກໍ່ບໍ່ໄດ້ຊົດເຊີຍໃຫ້ຈົນມາຮອດປັດຈຸບັນ. ມີ 44 ຄອບຄົວ ເທົ່າ 65.6% ແມ່ນບໍ່ໄດ້ຮັບຜົນກະທົບ ເຂົາເຈົ້າໄດ້ໃຫ້ເຫດຜົນວ່າ ພາຍຫຼັງທີ່ມີການສຳປະທານທີ່ນັ້ນ ຜົນຜະລິດເຂົ້າໄຮ່ຂອງເຂົາເຈົ້າແມ່ນບໍ່ມີການປ່ຽນແປງ ເພາະເນື້ອທີ່ສຳລັບເຮັດໄຮ່ຂອງເຂົາເຈົ້າແມ່ນຫຼາຍ ເພາະເນື້ອທີ່ສວນໃຫຍ່ແມ່ນບໍ່ທັນໄດ້ບຸກເບີກ ແລະ ຮອບວຽນໃນການເຮັດໄຮ່ຂອງເຂົາເຈົ້າແມ່ນບໍ່ໄດ້ຫຼຸດລົງ ສະນັ້ນຖ້າຝົນຟ້າປົກກະຕິນັ້ນຜົນຜະລິດຈາກເຂົ້າໄຮ່ທີ່ໄດ້ນັ້ນແມ່ນບໍ່ຫຼຸດລົງ ແລະ ທີ່ດິນຂອງຕົນບໍ່ໄດ້ນອນຢູ່ໃນເຂດສຳປະທານ

ປະຊາຊົນບ້ານຕະຮວກ ແມ່ນບໍ່ມີຄອບຄົວໃດທີ່ສູນເສຍທີ່ດິນໃຫ້ບໍລິສັດ ເພາະທີ່ດິນທີ່ໃຫ້ສຳປະທານເປັນທີ່ດິນກະສິກຳເປົ່າຫວ່າງຂອງບ້ານ, ແຕ່ສຳລັບປະຊາຊົນບ້ານປະຈຸດອນມີບາງກຸ່ມຄອບຄົວທີ່ສູນເສຍທີ່ດິນໄປ ເພາະເນື້ອທີ່ດິນຂອງປະຊາຊົນກຸ່ມດັ່ງກ່າວແມ່ນນອນຢູ່ໃນເຂດສຳປະທານທີ່ດິນຂອງບໍລິສັດ ເຊິ່ງກຸ່ມຄອບຄົວທີ່ມີທີ່ດິນນອນຢູ່ໃນເຂດສຳປະທານລວມທັງໝົດມີ 15 ຄອບຄົວ ເນື້ອທີ່ໆສູນເສຍທັງໝົດແມ່ນ 17.59 ເຮັກຕາ (ດິນສວນ 6.1 ເຮັກຕາ, ໄຮ່ 10.2 ເຮັກຕາ ແລະ ນາ 1.29 ເຮັກຕາ).

- ❖ **ທັດສະນະຂອງປະຊາຊົນຕໍ່ກັບການສຳປະທານທີ່ດິນ (ດ້ານການນຳໃຊ້ຫ້ວຍນ້ຳລຳເຊ)**

ພາຍຫຼັງທີ່ມີການສຳປະທານທີ່ດິນເກີດຂຶ້ນ ກຸ່ມຄອບຄົວຕົວຢ່າງ ບ້ານ ຕະຮວກ ໄດ້ໃຫ້ທັດສະນະວ່າການນຳໃຊ້ນ້ຳໃນຫ້ວຍນຳລຳເຊ ໂດຍສະເພາະແມ່ນການນຳໃຊ້ນ້ຳເຊລະມັງຕາມປະເພນີນັ້ນແມ່ນບໍ່ມີການປ່ຽນແປງ ຄືນຳໃຊ້ຕາມປົກກະຕິທີ່ເຄີຍໃຊ້ກັນມາຄືເມື່ອກ່ອນທີ່ບໍ່ມີການສຳປະທານ 54 ຄອບຄົວ ເທົ່າກັບ 100% ແມ່ນໃຫ້ທັດສະນະ ຫຼື ຄຳຄິດເຫັນຄືແນວນັ້ນ ແລະ ເຂົາເຈົ້າໄດ້ໃຫ້ເຫດຜົນທີ່ເວົ້າແບບນັ້ນຍ້ອນເຂົາເຈົ້າເຊື່ອວ່າການສຳປະທານທີ່ດິນຂອງບໍລິສັດດັ່ງກ່າວນັ້ນ ແມ່ນບໍ່ໄດ້ສົ່ງຜົນກະທົບຕໍ່ແຫຼ່ງນ້ຳໃຊ້ຂອງເຂົາເຈົ້າ ເພາະເນື້ອທີ່ໄດ້ຖືກບຸກເບີກໄດ້ນຳນວນໜ້ອຍໜຶ່ງ ແລະ ເນື້ອທີ່ໆຖືກບຸກເບີກນັ້ນເປັນປ່າໄລ່ ແລະ ປ່າເຫຼົ່າ (ປ່າເຫຼົ່າອ່ອນ ແລະ ໄຮ່ຫຼົກ) ເຊິ່ງບໍ່ແມ່ນປ່າປ້ອງກັນແຫຼ່ງນ້ຳ ຫຼື ປ່າທີ່ສາມາດເກັບກັກນຳໄວ້.

ຈາກການສຳພາດກຸ່ມຄອບຄົວຕົວຢ່າງ ບ້ານ ປະຈຸດອນ ເຂົາເຈົ້າໄດ້ໃຫ້ທັດສະນະວ່າ ພາຍຫຼັງທີ່ມີການສຳປະທານທີ່ດິນໄປແລ້ວນັ້ນ ການນຳໃຊ້ນ້ຳແມ່ນບໍ່ມີການປ່ຽນແປງ ເນື່ອງຈາກວ່າເນື້ອທີ່ດິນທີ່ບໍລິສັດສຳປະທານນັ້ນແມ່ນເຂດທີ່ດິນກະສິກຳຂອງບ້ານ ເຊິ່ງເຂດດັ່ງກ່າວນັ້ນແມ່ນເປັນປ່າໄມ້ໄລ່, ປ່າເຫຼົ່າ ແລະ ເປັນພື້ນ ທີ່ໆປະຊາຊົນເຮັດໄຮ່ໃນເມື່ອກອນ (ປ່າເຫຼົ່າແກ່, ປ່າເຫຼົ່າອ່ອນ ແລະ ໄຮ່ຫຼັກ) ຈຶ່ງເຮັດໃຫ້ການສຳປະທານທີ່ດິນນັ້ນ ບໍ່ມີຜົນກະທົບຫຍັງຕໍ່ແຫຼ່ງນ້ຳເພາະທາງບໍລິສັດກໍ່ບໍ່ໄດ້ນຳໃຊ້ນ້ຳ ແລະ ສານເຄມີຕ່າງໆເຂົ້າໃນການຜະລິດ (ປູກມັນຕົ້ນ), 64 ຄອບຄົວ ເທົ່າກັບ 100% ແມ່ນໃຫ້ທັດສະນະ ຫຼື ຄຳຄິດເຫັນຄືແນວນີ້.

## ພາກທີ IV: ພາກສະຫຼຸບ (Conclusion)

ຜ່ານການສຶກສາຄົ້ນຄວ້າ ແລະ ວິເຄາະແມ່ນສາມາດສະຫຼຸບໄດ້ວ່າ ພາຍຫຼັງມີການສຳປະທານທີ່ດິນເກີດຂື້ນຢູ່ບ້ານຕະຮວກ ແມ່ນບໍ່ໄດ້ເຮັດໃຫ້ສະຖານະພາບຂອງຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງຢູ່ບ້ານດັ່ງກ່າວມີການປ່ຽນແປ່ງ ຍ້ອນພື້ນທີ່ໆໃຫ້ສຳປະທານໄດ້ຖືກບຸກເບີກຈຳນວນໜ້ອຍໜຶ່ງ ແລະ ການສຳປະທານແມ່ນບໍ່ໄດ້ທຳລາຍພື້ນທີ່ສຳລັບຫາເຄື່ອງປ່າຂອງດົງ ແລະ ໄມ້ໃຊ້ສອຍຕ່າງໆຍັງຫຼາຍ (ຈຳນວນ 54 ຄອບຄົວ ເທົ່າກັບ 100 ແມ່ນໃຫ້ຄຳເຫັນແບບນີ້), ສ່ວນຢູ່ ບ້ານ ປະຈຸດອນ ມີ 40 ຄອບຄົວ ເຊິ່ງເທົ່າກັບ 62.5% ໄດ້ໃຫ້ຄຳເຫັນວ່າ ພາຍຫຼັງທີ່ມີການສຳປະທານທີ່ດິນສະຖານະພາບຊະນິດພັນໄມ້ຕ່າງໆແມ່ນມີການປ່ຽນແປງ, ອີກ 24 ຄອບຄົວ ເຊິ່ງເທົ່າກັບ 37.5% ໄດ້ໃຫ້ຄຳເຫັນວ່າ ພາຍຫຼັງມີການສຳປະທານທີ່ດິນນັ້ນ ຊະນິດພັນໄມ້ ແລະ ປະລິມານໄມ້ແມ່ນບໍ່ມີການປ່ຽນແປງ. ມີ 41 ຄອບຄົວ ເຊິ່ງເທົ່າກັບ 64.1% ແມ່ນໄດ້ໃຫ້ຄຳເຫັນວ່າພາຍຫຼັງມີການສຳປະທານທີ່ດິນ ສະຖານະພາບຂອງເຄື່ອງປ່າຂອງດົງແມ່ນໄດ້ມີການປ່ຽນແປງຄືໄດ້ຫຼຸດລົງກວ່າແຕ່ກ່ອນບໍ່ມີການສຳປະທານ, ອີກ 23 ຄອບຄົວ ເທົ່າ 35.9% ແມ່ນໄດ້ສະແດງຄຳເຫັນວ່າກ່ອນ ແລະ ຫຼັງມີການສຳປະທານທີ່ດິນຈຳນວນເຄື່ອງປ່າຂອງດົງແມ່ນບໍ່ມີການປ່ຽນແປງ. ສາເຫດທີ່ເຮັດໃຫ້ສະຖານະຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງມີການປ່ຽນແປງແມ່ນຍ້ອນພື້ນທີ່ໃຫ້ສຳປະທານເປັນພື້ນທີ່ໆປະຊາຊົນນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງໃນເມື່ອກ່ອນ (ໄມ້ກົມທີ່ໃຊ້ເຮັດເຮືອນ, ເລົ່າເຂົ້າ ແລະ ອື່ນໆ) ປັດຈຸບັນເນື້ອທີ່ດັ່ງກ່າວແມ່ນໄດ້ຖືກບຸກເບີກໄປຈົນເກືອບໝົດ ແລະ ມັນໄດ້ເຮັດໃຫ້ການເຂົ້າຫາປ່າຊົມໃຊ້ຂອງບ້ານຖີ່ຂື້ນກວ່າເກົ່າ, ສຳຫຼັບສາເຫດຂອງກຸ່ມຄອບຄົວທີ່ໃຫ້ຄຳຄິດເຫັນວ່າເມື່ອມີການສຳປະທານສະຖານະຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງບໍ່ມີການປ່ຽນແປງນັ້ນ ຍ້ອນວ່າເນື້ອທີ່ໆໃຫ້ສຳປະທານເຊິ່ງເປັນບ່ອນເກັບເຄື່ອງປ່າຂອງດົງນັ້ນ ປັດຈຸບັນແມ່ນ ກຳລັງບຸກເບີກທີ່ດິນເພື່ອປູກມັນຕົ້ນໄດ້ໜ້ອຍໜຶ່ງ (ບຸກເບີກໄດ້ປະມານ 5 ເຮັກຕາ) ແລະ ພື້ນທີ່ແຮສຳລັບເກັບເຄື່ອງປ່າຂອງດົງ ແລະ ໄມ້ໃຊ້ສອຍແມ່ນຍັງຫຼາຍຢູ່.

ສ່ວນທັດສະນະຂອງປະຊາຊົນພາຍຫຼັງທີ່ມີການສຳປະທານທີ່ດິນນັ້ນ ປະຊາຊົນບ້ານຕະຮວກຈຳນວນ 54 ຄອບຄົວ ເທົ່າກັບ 100% ໄດ້ໃຫ້ທັດສະນະວ່າພາຍຫຼັງມີການສຳປະທານທີ່ດິນສະພາບເສດຖະກິດຂອງເຂົາເຈົ້າແມ່ນບໍ່ມີການປ່ຽນແປງ ຍ້ອນຊີວິດການເປັນຢູ່ ແລະ ລາຍຮັບຂອງເຂົາເຈົ້າ

ແມ່ນຄືເກົ່າ ເນື່ອງຈາກວ່າປະຊາຊົນບໍ່ມີລາຍໄດ້ຈາກບໍລິສັດ ແລະ ບໍ່ໄດ້ມີສ່ວນຮ່ວມໃນໜ້າວຽກຂອງບໍລິສັດ ຫຍັງເລີຍ. ສ່ວນຢູ່ບ້ານປະຈຸດອນ ມີ 36 ຄອບຄົວ ເທົ່າກັບ 56.3% ໄດ້ໃຫ້ທັດສະນະວ່າເມື່ອມີການສຳປະທານໄດ້ເຮັດໃຫ້ສະພາບເສດຖະກິດມີການປ່ຽນແປງ ແລະ ອີກ 28 ຄອບຄົວ ເທົ່າກັບ 43.8% ແມ່ນໄດ້ໃຫ້ທັດສະນະວ່າສະພາບເສດຖະກິດພາຍຫຼັງມີການສຳປະທານແມ່ນຄືເກົ່າ. ສາເຫດທີ່ເຮັດໃຫ້ມີການປ່ຽນແປງແມ່ນ ການສຳປະທານທີ່ດິນໄດ້ທຳລາຍບ່ອນທຳມາຫາກິນຄືທຳລາຍພື້ນທີ່ເກັບເຄື່ອງປ່າຂອງ ພ້ອມດຽວກັນນັ້ນກໍ່ບໍ່ໄດ້ເຂົ້າໄປມີສ່ວນຮ່ວມໃນໜ້າວຽກຕ່າງໆຂອງບໍລິສັດ, ສ່ວນສາເຫດທີ່ບອກວ່າຄືເກົ່າແມ່ນຍ້ອນ ເຂົາເຈົ້າແມ່ນສາມາດຫາກິນຕາມປົກກະຕິຄືເມື່ອກ່ອນບໍ່ມີການສຳປະທານ, ເນື້ອທີ່ເກັບເຄື່ອງປ່າຂອງດົງໄດ້ຖືກທຳລາຍຈຳນວນໜ້ອຍໜຶ່ງ ແລະ ເຂົ້າເຈົ້າບໍ່ໄດ້ມີສວນພົວພັນຫຍັງເລີຍໂດຍສະເພາະແມ່ນການເຂົ້າໄປເຮັດວຽກນຳບໍລິສັດເຊັ່ນດຽວກັນ.

ສ່ວນທັດສະນະຂອງປະຊາຊົນຕໍ່ກັບສັງຄົມພາຍຫຼັງມີການສຳພາດທານນັ້ນ, ປະຊາຊົນບ້ານຕະຣວກ ຈຳນວນ 54 ຄອບຄົວ ເທົ່າກັບ 100% ໄດ້ໃຫ້ທັດສະນະວ່າເມື່ອມີການສຳປະທານສະພາບສັງຄົມແມ່ນມີການປ່ຽນແປງ ການສຳປະທານນັ້ນແມ່ນບໍ່ໄດ້ມີການບຸກລຸກພື້ນທີ່ປ່າສັກສິດ, ປ່າຊ້າ ແລະ ປ່າສະຫງວນ ທີ່ເປັນການແຕະຕ້ອງເຖິງຮີດຄອງປະເພນີຂອງເຂົາເຈົ້າ ແຕ່ວ່າຄວາມພໍໃຈກັບການເຂົ້າມາຂອງບໍລິສັດນັ້ນ ປະຊາຊົນ 8 ຄອບຄົວ ເທົ່າກັບ 14.8% ແມ່ນບໍ່ມີ ຄວາມພໍໃຈ, ມີ 43 ຄອບຄົວ ເທົ່າກັບ 79.6%ໄດ້ໃຫ້ທັດສະນະທຳມະດາ ແລະ ອີກ 3 ຄອບຄົວ ເທົ່າກັບ 5.6% ພໍໃຈ. ສ່ວນທັດສະນະຂອງປະຊາຊົນບ້ານປະຈຸດອນໃນດ້ານສັງຄົມນີ້ ການສຳປະທານໄດ້ມີການບຸກລຸກເຂົ້າພື້ນທີ່ປ່າສັກສິດ, ປ່າຊົມໃຊ້ ແລະ ປ່າສະຫງວນຂອງບ້ານ ເຊິ່ງເປັນການແຕະຕ້ອງເຖິງຮີດຄອງປະເພນີຂອງເຂົາເຈົ້າ, ປະຊາຊົນຈຳນວນ 41 ຄອບຄົວ ເທົ່າກັບ 64% ບອກວ່າບໍ່ພໍໃຈກັບການເຂົ້າມາຂອງບໍລິສັດ, ມີ 20 ຄອບຄົວ ເທົ່າ 31.3% ບອກວ່າທຳມະດາ ແລະ ອີກ 3 ຄອບຄົວ ເທົ່າກັບ 4.7% ໄດ້ເວົ້າວ່າມີຄວາມພໍໃຈ.

ສຳລັບທັດສະນະຂອງປະຊາຊົນຕໍ່ກັບການນຳໃຊ້ທີ່ດິນນັ້ນ, ປະຊາຊົນບ້ານຕະຣວກ 48 ຄອບຄົວ ເທົ່າກັບ 85.2% ບອກວ່າໄດ້ຮັບຜົນກະທົບຈາກກາສຳປະທານທີ່ດິນໃນການນຳໃຊ້ທີ່ດິນ ເພາະ ບໍລິເວນທີ່ບຸກເບີກເພື່ອຈະປູກມັນຕົ້ນນັ້ນ ແມ່ນບໍ່ສາມາດຈະເຮັດໄຮ່ປູກເຂົ້າໄດ້ ແລະ 8 ຄອບຄົວ ເທົ່າກັບ 14.8% ບໍ່ໄດ້ຮັບຜົນກະທົບເຫດຜົນຍ້ອນວ່າ ດິນບໍລິເວນທີ່ບຸກເບີກນັ້ນແມ່ນບໍ່ໄດ້ຖືກດິນຂອງເຂົ້າເຈົ້າແລະ ບໍ່ເຄີຍເຮັດໄຮ່ໃນພື້ນທີ່ດັ່ງກ່າວ. ສ່ວນບ້ານປະຈຸດອນມີ 22 ຄອບຄົວ ເທົ່າກັບ 34.4% ໄດ້ຮັບຜົນກະທົບຈາກການສຳປະທານ ເຂົາເຈົ້າໄດ້ໃຫ້ເຫດຜົນວ່າການສຳປະທານທີ່ດິນນັ້ນໄດ້ເຮັດໃຫ້ຜົນຜະລິດເຂົ້າໄຮ່ຂອງເຂົາເຈົ້າຫຼຸດລົງ ເພາະຮອບວຽນໄຮ່ຫຼຸດລົງ ແລະ ອີກ 44 ຄອບຄົວ ເທົ່າ 65.6% ແມ່ນບໍ່ໄດ້ຮັບຜົນກະທົບຍ້ອນຜົນຜະລິດເຂົ້າໄຮ່ຂອງເຂົາເຈົ້າແມ່ນບໍ່ມີການປ່ຽນແປງ ເພາະເນື້ອທີ່ສຳລັບເຮັດໄຮ່ຂອງເຂົາເຈົ້າແມ່ນຫຼາຍ.

ທັດສະນະຂອງປະຊາຊົນຕໍ່ກັບການນຳໃຊ້ນ້ຳຂອງປະຊາຊົນ, ທັງສອງບ້ານແມ່ນໃຫ້ທັດສະນະຄືກັນຄື ພາຍຫຼັງມີການສຳປະທານແມ່ນບໍ່ໄດ້ເຮັດໃຫ້ການນຳໃຊ້ນ້ຳບໍ່ມີການປ່ຽນແປງ ເພາະບໍລິສັດບໍ່ໄດ້ມີການນຳໃຊ້ນ້ຳ ແລະ ສານເຄມີເຂົ້າໃນການຜະລິດກໍ່ຄືການປູກມັນຕົ້ນ.

# ເອກະສານອ້າງອີງ (References)


ຄຳພັນ ແກ້ວວິໄລສັກ, 2009. ການປ່ຽນແປງຂອງໝູ່ບ້ານຢູ່ພາກໃຕ້ຂອງລາວ - ການສຳປະທານທີ່ດິນ ແລະ ການຫັນປ່ຽນຂອງຊຸມຊົນ.

ສຄຂດ, ເມສາ 2008. ບົດສະຫຼຸບການຄົ້ນຄວ້າ ການປະເມີນຜົນທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມຈາກໂຄງການປູກໄມ້ອຸດສະຫະກຳເປັນສິນຄ້າ ຢູ່ ສປປ ລາວ (ມີນາ, 2007 ຫາພຶດສະພາ, 2008).

ລຳພອງ ຂັນທະລີວັນ, 2009. ຄວາມປ່ຽນແປງຊີວິດການເປັນຢູ່ ເນື່ອງຈາກການສຳປະທານທີ່ດິນ.

ວົງ ນັນທະວົງ, 2009. ບົດລາຍງານຜົນການທົດລອງເກັບກຳຂໍ້ມູນກ່ຽວກັບການເຊົ່າ ແລະ ສຳປະທານທີ່ດິນລັດຢູ່ແຂວງວຽງຈັນ, ສປປ ລາວ.ໄລຍະທີ II.